ADB

LAOS
Simply Beautiful

ມາດຕະຖານກິດຈະກຳຂີ່ສະລິ່ງ

ຄຳນຳ

ອີງແຜນຍຸດທະສາດການພັດທະນາການທ່ອງທ່ຽວຂອງ ສປປ ລາວ ປີ 2020-2030.

ອີງຕາມກະແສຄວາມຮຽກຮ້ອງຕ້ອງການຂອງຕະຫຼາດທ່ອງທ່ຽວໃນປະຈຸບັນ ແລະ ກະແສການພັດທະນາການທ່ອງທ່ຽວ ໃນຂົງເຂດພາກພື້ນ ແລະ ສາກົນ ທີ່ກຳລັງໃຫ້ຄວາມສຳຄັນຕໍ່ການສ້າງຄວາມຫຼາກຫຼາຍທາງດ້ານກິດຈະກຳການທ່ອງທ່ຽວໃນສະຖານທີ່ທ່ອງທ່ຽວຂອງຕົນ ແນໃສ່ເພື່ອໃຫ້ນັກທ່ອງທ່ຽວໄດ້ແລກປ່ຽນ, ຮຽນຮູ້ປະສົບການໃໝ່ໆ ເພື່ອຄວາມມ່ວນຊື່ນ, ເພີດເພີນ ຂອງນັກທ່ອງທ່ຽວທີ່ມາໃຊ້ບໍລິການ ແລະ ມາໃຊ້ບໍລິການຫຼາຍຂຶ້ນ.

ໄລຍະຜ່ານມາ ການພັດທະນາກິດຈະກຳການທ່ອງທ່ຽວຂອງ ສປປ ລາວ ໂດຍລວມເຫັນວ່າ ຍັງເຮັດແບບກະແຈກະຈາຍ ແລະ ເຮັດຕາມທ່າແຮງຄວາມພ້ອມຂອງຜູ້ປະກອບການ ການຕິດຕາມກວດກາຂອງພາກສ່ວນທີ່ກ່ຽວຂ້ອງ ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ, ຍັງຂາດການຄົ້ນຄວ້າເອກະສານຄູ່ມືສະເພາະ ທີ່ເປັນມາດຕະຖານກິດຈະກຳການທ່ອງທ່ຽວ ເຮັດການໃຫ້ການພັດທະນາກິດຈະກຳການທ່ອງທ່ຽວໂດຍລວມ ບໍ່ເປັນມາດຕະຖານເທົ່າທີ່ຄວນ.

ເພື່ອເຮັດໃຫ້ການພັດທະນາກິດຈະກຳການທ່ອງທ່ຽວຢ່າງມີຈຸດສຸມ ແລະ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ, ພັດທະນາຕາມກະແສຄວາມຮຽກຮ້ອງຕ້ອງການຂອງກຸ່ມຕະຫຼາດເປົ້າໝາຍ, ມີການຕິດຕາມກວດກາ ແລະ ຄຸ້ມຄອງທີ່ຮັດກຸມ ບົນພື້ນຖານການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ.

ເອກະສານສະບັບນີ້ ສ້າງຂຶ້ນບົນພື້ນຖານຫຼັກການລວມຂອງພາກພື້ນ ແລະ ສາກົນ ກ່ຽວກັບການກຳນົດມາດຕະຖານກິດຈະກຳການທ່ອງທ່ຽວຂີ່ສະລິ, ໂດຍແນໃສ່ຄວາມປອດໄພຂອງນັກທ່ອງທ່ຽວເປັນຫຼັກ, ຜູ້ປະກອບການເຫັນໄດ້ຄວາມສຳຄັນ ໃນການສ້າງກິດຈະກຳການທ່ອງທ່ຽວທີ່ໄດ້ມາດຕະຖານ, ເຮັດໃຫ້ນັກທ່ອງທ່ຽວ ມີຄວາມເຊື່ອໝັ້ນຕໍ່ກິດຈະກຳການທ່ອງທ່ຽວໂດຍລວມ ແລະ ເປັນການໂຄສະນາໄປພ້ອມໆກັນ.

ການກຳນົດເນື້ອໃນ ແລະ ເງື່ອນໄຂຕ່າງໆ ໃນມາດຕະຖານກິດຈະກຳການທ່ອງທ່ຽວຂີ່ສະລິງສະບັບນີ້, ຄະນະຮັບຜິດຊອບສ້າງມາດຕະຖານ ພາຍໃຕ້ການຊີ້ນຳຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍການສະໜັບສະໜູນທຶນຮອນຈາກ ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ.

ຂໍສະແດງຄວາມຂອບໃຈ ມາຍັງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານທຶນຮອນ ໃນການສ້າງມາດຕະຖານຂຶ້ນມາ, ຫວັງຢ່າງຍິ່ງວ່າ ມາດຕະຖານກິດຈະກຳການທ່ອງທ່ຽວ ນີ້ຈະເປັນບ່ອນອີງໃຫ້ແກ່ພາກລັດທີ່ກ່ຽວຂ້ອງ ແລະ ຜູ້ປະກອບການທີ່ຜູ້ຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ການພັດທະນາກິດຈະກຳການທ່ອງທ່ຽວຂີ່ສະລິງ ຢູ່ບັນດາແຫຼ່ງທ່ອງທ່ຽວຂອງລາວ ສາມາດຮັບປະກັນໄດ້ ດ້ານຄວາມປອດໄພ ແລະ ມີຄວາມຍືນຍົງຕະຫຼອດໄປ.

ສາລະບານ

ຄຳນຳ I

ພາກທີ I 1

ພາກສະເໜີ 1

1. ເຫດຜົນ ແລະ ຫຼັກການພື້ນຖານ 1

1.1. ຫຼັກການພື້ນຖານຂອງການສ້າງກົດຈະກຳຂີ່ສະລິ. 1

1.2. ອະທິບາຍຄຳສັບ 2

1.3. ຈຸດປະສົງ 3

1.4. ຂອບເຂດການນຳໃຊ້ 3

1.5. ຜົນປະໂຫຍດທີ່ຈະໄດ້ຮັບ 3

ພາກທີ II 5

ບັນດາເງື່ອນໄຂຫຼັກສຳລັບກົດຈະກຳການທ່ອງທ່ຽວຂີ່ສະລິ 5

1. ເງື່ອນໄຂການສຳລັບຜູ້ປະກອບການຂີ່ສະລິ 5

1.1. ການດຳເນີນທຸລະກິດການທ່ອງທ່ຽວ 5

- ຜູ້ປະກອບການ ຕ້ອງມີໃບອະນຸຍາດຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ. 5

1.2. ການບໍລິຫານ ແລະ ຄຸ້ມຄອງ 5

1.3. ການຄຸ້ມຄອງສິ່ງແວດລ້ອມ 6

2. ເງື່ອນໄຂ ແລະ ໜ້າທີ່ຂອງຜູ້ໃຫ້ການບໍລິການສະລິ (ຜູ້ນຳທ່ຽວ) 6

2.1. ເງື່ອນໄຂຂອງພະນັກງານທີ່ຈະບໍລິການສະລິ 6

2.2. ໜ້າທີ່ຂອງພະນັກງານບໍລິການສະລິ (ຜູ້ນຳທ່ຽວ) 6

2.3. ຂໍ້ຫ້າມສຳລັບພະນັກງານບໍລິການສະລິ (ຜູ້ນຳທ່ຽວ) 7

3. ເງື່ອນໄຂ ແລະ ໜ້າທີ່ຂອງຜູ້ໃຊ້ບໍລິການ (ນັກທ່ອງທ່ຽວ) 8

1.1. ເງື່ອນໄຂຂອງຜູ້ທີ່ຈະໃຊ້ບໍລິການສະລິ 8

1.2. ໜ້າທີ່ຂອງຜູ້ທີ່ໃຊ້ບໍລິການສະລິ 8

4. ເງື່ອນໄຂການໃຫ້ບໍລິການ, ອຸປະກອນຊ່ວຍປະຖົມພະຍາບານຂັ້ນຕົ້ນ 9

5. ເງື່ອນໄຂສະຖານທີ່ບໍລິການ, ການຕິດຕັ້ງສະລິ ແລະ ສະຖານີ 11

5.1. ເງື່ອນໄຂການເລືອກສະຖານທີ່: 11

5.2. ເງື່ອນໄຂການຕິດຕັ້ງສາຍສະລິ 12

5.3. ເງື່ອນໄຂການສ້າງ ແລະ ຕິດຕັ້ງສະຖານີ (Platform) 18

6. ເງື່ອນໄຂອຸປະກອນຂອງຜູ້ໃຊ້ບໍລິການສະລິ 20

ຕາຕະລາງກວດກາ ບັນດາເງື່ອນໄຂ-ມາດຕະຖານ ສຳລັບການບໍລິການຂີ່ສະລິ 24

ພາກທີ III: 33

ມາດຕະການໃນການຈັດຕັ້ງປະຕິບັດ, ນະໂຍບາຍ, ມາດຕະການຕໍ່ຜູ້ລະເມີດ 33

1. ຂໍ້ຫ້າມ 33

7. ການແກ້ໄຂຂໍ້ຂັດແຍ່ງ 33

8. ນະໂຍບາຍຕໍ່ຜູ້ມີຜົນງານ..... 33
9. ມາດຕະການຕໍ່ຜູ້ລະເມີດ 34
ເອກະສານອ້າງອີງ..... 35

ພາກທີ I

ພາກສະເໜີ

1. ເຫດຜົນ ແລະ ຫຼັກການພື້ນຖານ

ສປປ ລາວ ເປັນປະເທດທີ່ມີຄວາມອຸດົມສົມບູນທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດອັນເກົ່າແກ່ ເຊິ່ງເອື້ອອຳນວຍຕໍ່ການສ້າງ ແລະ ພັດທະນາກິດຈະກຳການທ່ອງທ່ຽວໄດ້ຢ່າງຫຼາກຫຼາຍ ເພື່ອສະໜອງຕໍ່ຄວາມຕ້ອງການຂອງນັກທ່ອງທ່ຽວ ທີ່ເພີ່ມຂຶ້ນໃນແຕ່ລະປີ, ໄລຍະຜ່ານມາການສ້າງ ແລະ ພັດທະນາກິດຈະກຳການທ່ອງທ່ຽວ ເຫັນວ່າມີຄວາມຫຼາກຫຼາຍໃນຂອບເຂດທົ່ວປະເທດ, ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ກິດຈະກຳການທ່ອງທ່ຽວທີ່ສ້າງຂຶ້ນ ສ່ວນໃຫຍ່ ແມ່ນເປັນການສ້າງຂຶ້ນບົນພື້ນຖານຄວາມພ້ອມ ແລະ ປະສົບການຂອງຜູ້ປະກອບການທຸລະກິດທ່ອງທ່ຽວໂດຍລວມ, ມີບາງກິດຈະກຳການທ່ອງທ່ຽວ ເຮັດໃຫ້ຜູ້ໃຊ້ບໍລິການ ໄດ້ຮັບຜົນກະທົບຕໍ່ຊີວິດ ແລະ ຊັບສິນ. ຕໍ່ກັບບັນຫາດັ່ງກ່າວ ພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຈຶ່ງໄດ້ປະສານສົມທົບກັນ ເພື່ອປຶກສາຫາລື ສ້າງມາດຕະຖານກິດຈະກຳການທ່ອງທ່ຽວຄັ້ງທຳອິດ ຢູ່ເມືອງວັງວຽງ, ແຂວງວຽງຈັນ ໃນວັນທີ 26-17/12/2019 ໂດຍສະເພາະແມ່ນ ໄດ້ລົງເລິກຕໍ່ກິດຈະກຳການທ່ອງທ່ຽວທາງນ້ຳ, ກິດຈະກຳການທ່ອງທ່ຽວທາງຖ້ຳ ແລະ ກິດຈະກຳການທ່ອງທ່ຽວຂີ່ສະລິ.

ໃນເອກະສານສະບັບນີ້ ແມ່ນຈະໄດ້ລົງເລິກຄົ້ນຄວ້າກ່ຽວກັບມາດຕະຖານກິດຈະກຳທ່ອງທ່ຽວຂີ່ສະລິ ໃນເຂດແຫຼ່ງທ່ອງທ່ຽວຂອງເມືອງວັງວຽງ. ທັງນີ້ ເພື່ອເຮັດໃຫ້ການສ້າງກິດຈະກຳດັ່ງກ່າວ ມີຄວາມເປັນເອກະພາບກັບ ທາງດ້ານເຕັກນິກ, ເງື່ອນໄຂ ແລະ ດ້ານການຄຸ້ມຄອງການໃຫ້ບໍລິການຂີ່ສະລິ ໃນຂອບເຂດເມືອງວັງວຽງ ໄດ້ຮັບການພັດທະນາຢ່າງມີຄຸນນະພາບ ຮັບປະກັນໄດ້ທາງດ້ານຄວາມປອດໄພ, ນັກທ່ອງທ່ຽວມີຄວາມເຊື່ອໝັ້ນ ແລະ ມາໃຊ້ບໍລິການ ກິດຈະກຳດັ່ງກ່າວ ດ້ວຍຄວາມປະທັບໃຈ.

1.1. ຫຼັກການພື້ນຖານຂອງການສ້າງກິດຈະກຳຂີ່ສະລິ.

ການພັດທະນາກິດຈະກຳການທ່ອງທ່ຽວຂີ່ສະລິ ໃນສະຖານທີ່ທ່ອງທ່ຽວ ເພື່ອໃຫ້ບໍລິການນັກທ່ອງທ່ຽວ; ຜູ້ປະກອບການຄວນຄຳນຶງເຖິງຫຼາຍປັດໃຈ ທີ່ບໍ່ກໍ່ໃຫ້ເກີດຜົນກະທົບດ້ານລົບຕໍ່ທຳມະຊາດ ແລະ ສິ່ງແວດລ້ອມ ໃນບໍລິເວນທີ່ຈະພັດທະນາກິດຈະກຳຂີ່ສະລິ. ໃນປະຈຸບັນ ເຫັນວ່າກິດຈະກຳທ່ອງທ່ຽວຂີ່ສະລິ ກຳລັງໄດ້ຮັບຄວາມນິຍົມໃນສະຖານທີ່ທ່ອງທ່ຽວຂອງ ສປປ ລາວ ເວົ້າລວມ, ໂດຍສະເພາະຢູ່ເມືອງວັງວຽງ ເຫັນວ່າ ມີກິດຈະກຳທ່ອງທ່ຽວຂີ່ສະລິ ຢູ່ເກືອບທຸກສະຖານທ່ອງທ່ຽວຂອງເມືອງວັງວຽງ. ການພັດທະນາກິດຈະກຳດັ່ງກ່າວ ແມ່ນຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ເປັນຕົ້ນແມ່ນ ຄຸນນະພາບຂອງອຸປະກອນ ແລະ ເຕັກນິກການຕິດຕັ້ງ ຍັງບໍ່ໄດ້ມາດຕະຖານສາກົນ, ພາກສ່ວນທີ່ກ່ຽວຂ້ອງຂັ້ງສູນກາງ ແລະ ທ້ອງຖິ່ນ ຍັງຂາດການຄົ້ນຄວ້າເອກະສານທີ່ເປັນມາດຕະຖານ ທີ່ເປັນການອ້າງ ແລະ ນຳໃຊ້ເຂົ້າໃນຕິດຕາມກວດກາ ແລະ ຄຸ້ມຄອງກິດຈະກຳ

ດັ່ງກ່າວ ເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳ ສິ່ງຜົນກະທົບດ້ານລົບຕໍ່ຊີວິດ ແລະ ສັບສົນຂອງນັກທ່ອງທ່ຽວ. ດັ່ງນັ້ນ ຄະນະຮັບຜິດຊອບ ພາຍໃຕ້ການຊີ້ນຳຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງໄດ້ຄົ້ນຄວ້າ ສ້າງເອກະສານ ມາດຕະຖານກິດຈະກຳການທ່ອງທ່ຽວຂີ່ສະລິງ ຂຶ້ນມາ ເພື່ອນຳໃຊ້ໃນການພັດທະນາ, ຕິດຕາມກວດກາ ແລະ ຄຸ້ມຄອງກິດຈະກຳດັ່ງກ່າວ ແນໃສ່ເພື່ອເຮັດໃຫ້ການບໍລິການກິດຈະກຳທ່ອງທ່ຽວຂີ່ສະລິງ ຮັບປະກັນໄດ້ທາງດ້ານຄຸນນະພາບ ແລະ ຄວາມປອດໄພຂອງນັກທ່ອງທ່ຽວເປັນຫຼັກ, ເຮັດໃຫ້ກິດຈະກຳດັ່ງກ່າວ ມີຄວາມຍືນຍົງສືບຕໍ່ໄປ.

1.2. ອະທິບາຍຄຳສັບ

- **ມາດຕະຖານກິດຈະກຳການທ່ອງທ່ຽວ:** ໝາຍເຖິງການກຳນົດເງື່ອນໄຂ ແລະ ຕົວຊີ້ບອກ ເພື່ອແນ່ໃສ່ການປັບປຸງຄຸນນະພາບຂອງຜະລິດຕະພັນການທ່ອງທ່ຽວນັ້ນໆ ໃຫ້ມີຄຸນນະພາບສູງຂຶ້ນ.
- **ກິດຈະກຳການທ່ອງທ່ຽວຂີ່ສະລິງ:** ໝາຍເຖິງກິດຈະກຳການທ່ອງທ່ຽວແບບຜະຈົນໄພ ແລະ ຂີ່ສະລິງ ໃນສະຖານທີ່ທາງທຳມະຊາດປ່າໄມ້, ແລະ ສາຍນ້ຳ ເນັ້ນໃສ່ທາມກາງທຳມະຊາດ
- **ຜູ້ປະກອບການຂີ່ສະລິງ:** ໝາຍເຖິງບຸກຄົນ ຫຼື ຄະນະບຸກຄົນທີ່ດຳເນີນການກ່ຽວກັບການຮັບຈອງ, ການຮັບສົ່ງ ແລະ ການໃຫ້ບໍລິການກ່ຽວກັບສະລິງ ທີ່ໃຫ້ບໍລິການການທ່ອງທ່ຽວໂດຍການຂີ່ເສັ້ນສະລິງຜ່ານພູ, ປ່າໄມ້ ແລະ ນ້ຳຕົກ ເດີນທາງທາງອາກາດທີ່ມີຄວາມສູງບໍ່ຕ່ຳກວ່າ 5 ແມັດ ຫ່າງຈາກລະດັບພື້ນດິນ.
- **ພະນັກງານບໍລິການຂີ່ສະລິງ:** ໝາຍເຖິງບຸກຄົນທີ່ຜ່ານການຝຶກອົບຮົມດ້ານຂີ່ສະລິງ ໂດຍສາມາດແນະນຳ ຫຼື ສາທິດວິທີການຂີ່ສະລິງໃຫ້ແກ່ລູກຄ້າເຂົ້າໃຈ ກ່ອນການຂີ່ສະລິງຕົວຈິງ ຈາກຈຸດເລີ່ມຕົ້ນຈົນເຖິງປາຍທາງ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ຜູ້ໃຊ້ບໍລິການ.
- **ມາດຕະຖານ:** ໝາຍເຖິງການກຳນົດຄຸນລັກສະນະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດ ລ້ອມ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງກັບມາດຕະຖານເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບ ຂອງສິ່ງທີ່ກ່າວມານັ້ນ
- **ການມີສ່ວນຮ່ວມຂອງປະຊາຊົນ:** ໝາຍເຖິງປະຊາຊົນທ້ອງຖິ່ນເຂົ້າມາຮ່ວມກັບກິດຈະກຳດ້ານການທ່ອງທ່ຽວເປັນຕົ້ນ: ພະນັກງານນຳທ່ຽວ, ຜູ້ສະໜອງການບໍລິການອາຫານ, ເຄື່ອງດື່ມ, ການບໍລິການຂີ່ສະລິງ ແລະ ກິດຈະກຳການ ທ່ອງທ່ຽວອື່ນໆ.
- **ກິດຈະກຳການທ່ອງທ່ຽວ:** ໝາຍເຖິງການເຄື່ອນໄຫວວຽກງານກ່ຽວກັບການບໍລິການນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ການທ່ຽວຊົມ, ການບູລະນະແຫຼ່ງທ່ອງທ່ຽວ, ການພັກເຊົາ, ການບໍລິການສະຖານທີ່ພັກແຮມ ແລະ ການນຳທ່ຽວ.
- **ຜະລິດຕະພັນທ່ອງທ່ຽວ:** ໝາຍເຖິງຊັບພະຍາກອນການທ່ອງທ່ຽວຕາມທຳມະຊາດ ແລະ ມະນຸດສ້າງຂຶ້ນເພື່ອເປັນ ສິ່ງຮອງຮັບ, ສະໜອງ ແລະ ບໍລິການໃຫ້ນັກທ່ອງທ່ຽວ
- **ແຫຼ່ງທ່ອງທ່ຽວ:** ໝາຍເຖິງຊັບພະຍາກອນການທ່ອງທ່ຽວທີ່ໄດ້ຮັບການພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວ ເພື່ອ ສາມາດດຶງດູດນັກທ່ອງທ່ຽວໃຫ້ເດີນທາງມາທ່ຽວຊົມ
- **ສະຖານທີ່ທ່ອງທ່ຽວ:** ໝາຍເຖິງແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ແລະ ມີການບໍລິການໃຫ້ແກ່ນັກທ່ອງທ່ຽວ.

- **ສາຍສະລິງ (Zipline):** ໝາຍເຖິງ ສາຍສະລິງດຶງລະຫວ່າງ 2 ຈຸດ ແລະ ສູງຈາກພື້ນດິນໂດຍໃຊ້ ຫມາກລອກເປັນໂຕຊ່ວຍດຶງຈາກຕົ້ນໄມ້ (ຈຸດທີໜຶ່ງ) ໄປຫາ ອີກຕົ້ນໄມ້ໜຶ່ງ (ຈຸດທີ ສອງ) ຊຶ່ງອາໃສ ແຮງຖ່ວງດຶງຂອງໂລກ.
- **ສະຖານີ (Flatform):** ໝາຍເຖິງ ສະຖານີ ຈຸດຮັບ-ຈຸດປ່ອຍ)ນັກທ່ອງທ່ຽວ (ຈາກຈຸດໜຶ່ງໄປຫາອີກ ຈຸດໜຶ່ງ ແລະ ເປັນບ່ອນຢືນລໍຖ້າສໍາລັບໄປຕໍ່ຂອງນັກທ່ອງທ່ຽວ. ປະກອບດ້ວຍອຸປະກອນປ້ອງກັນ ການບາດເຈັບຕິດໄວ້ໃນຈຸດທີ່ເສັ້ນສະລິງເຂົ້າມາຮອດ ພ້ອມທັງມີຈຸດຢຶດສາຍນິລະໄພ ເພື່ອໃຫ້ນັກ ທ່ອງທ່ຽວໄດ້ເກາະໄວ້ ໃນໄລຍະລໍຖ້າ.

1.3. ຈຸດປະສົງ

- ເພື່ອເຮັດໃຫ້ການພັດທະນາກິດຈະກໍາທ່ອງທ່ຽວຂີ່ສະລິງ ໃນພື້ນທີ່ເມືອງວັງວຽງ ທັນເຂົ້າສູ່ລະບົບ ພັດທະນາມາດຕະຖານ, ມີການຕິດຕາມກວດກາ ແລະ ຄຸ້ມຄອງຕາມລະບຽບການທີ່ກ່ຽວຂ້ອງ.
- ໃຫ້ຜູ້ປະກອບການ ໄດ້ນໍາໃຊ້ເປັນບ່ອນອີງ ໃນການສ້າງ ແລະ ພັດທະນາກິດຈະກໍາທ່ອງທ່ຽວຂີ່ສະລິງ ຂອງຕົນ ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກໍານົດໃນເອກະສານມາດຕະຖານ.
- ເປັນເອກະສານອ້າງອີງແກ່ພາກລັດທີ່ກ່ຽວຂ້ອງ ໄດ້ນໍາໃຊ້ເຂົ້າໃນການຕິດຕາມ, ກວດກາ ແລະ ຄຸ້ມ ຄອງກິດຈະກໍາທ່ອງທ່ຽວຂີ່ສະລິງພາຍໃນເມືອງວັງວຽງ.
- ເພື່ອແນໃສ່ການໃຫ້ບໍລິການກິດຈະກໍາທ່ອງທ່ຽວຂີ່ສະລິງ ສາມາດຮັບປະກັນໄດ້ທາງດ້ານຄວາມປອດ ໄພ ແລະ ຄວາມມ່ວນຊື່ນ, ເພີດເພີນຂອງນັກທ່ອງທ່ຽວ.

1.4. ຂອບເຂດການນໍາໃຊ້

ມາດຕະຖານກິດຈະກໍາການທ່ອງທ່ຽວຂີ່ສະລິງສະບັບນີ້ ສ້າງຂຶ້ນເພື່ອໃຫ້ຜູ້ປະກອບການ ນໍາໃຊ້ເປັນຄູ່ ມືແນະນໍາການສ້າງ ແລະ ພັດທະນາກິດຈະກໍາທ່ອງທ່ຽວຂີ່ສະລິງໃນສະຖານທີ່ທ່ອງທ່ຽວຂອງເມືອງວັງວຽງ ຕາມເນື້ອໃນ ແລະ ເງື່ອນໄຂທີ່ໄດ້ກໍານົດໃນມາດຕະຖານ, ພານສ່ວນທີ່ກ່ຽວຂ້ອງຂອງລັດ ສາມາດໃຊ້ເປັນ ບ່ອນອີງໃນການຕິດຕາມ, ກວດກາ ແລະ ຄຸ້ມຄອງຫົວໜ່ວຍບໍລິການທ່ອງທ່ຽວຂີ່ງສະລິງໃນສະຖານທີ່ທ່ອງ ທ່ຽວຂອງເມືອງວັງວຽງ ເພື່ອເຮັດໃຫ້ກິດຈະກໍາການທ່ອງທ່ຽວຂີ່ສະລິງ ຮັບປະກັນໄດ້ດ້ານຄວາມປອດໄພຕໍ່ນັກ ທ່ອງທ່ຽວ.

1.5. ຜົນປະໂຫຍດທີ່ຈະໄດ້ຮັບ

- ຜູ້ປະກອບການມີຄູ່ມື ທີ່ເປັນມາດຕະຖານກິດຈະກໍາການທ່ອງທ່ຽວຂີ່ສະລິງ ເພື່ອເປັນບ່ອນອີງໃນ ການສ້າງ ແລະ ພັດທະນາກິດຈະກໍາທ່ອງທ່ຽວຂີ່ສະລິງຂອງຕົນ ຕາມມາດຕະຖານ ເພື່ອສ້າງຄວາມ ເຊື່ອໝັ້ນແກ່ນັກທ່ອງທ່ຽວ.
- ພາກລັດທີ່ກ່ຽວຂ້ອງໄດ້ມີເອກະສານ ເພື່ອເປັນບ່ອນອີງໃນການຕິດຕາມ, ກວດກາ ແລະ ຄຸ້ມຄອງ ການຈັດຕັ້ງປະຕິບັດກິດຈະກໍາບໍລິການທ່ອງທ່ຽວຂີ່ສະລິງ ຂອງຜູ້ປະກອບການ ພາຍໃນເມືອງວັງວຽງ

- ນັກທ່ອງທ່ຽວໄດ້ຮັບການບໍລິການທີ່ໄດ້ມາດຕະຖານ ແລະ ມີຄວາມປອດໄພ ທັງເປັນການສ້າງພາບພົດທີ່ດີໃຫ້ແກ່ການທ່ອງທ່ຽວຂອງ ສປປ ລາວ ໄປພ້ອມໆກັນ.

ພາກທີ II

ບັນດາເງື່ອນໄຂຫຼັກສຳລັບກິດຈະກຳການທ່ອງທ່ຽວຂີ່ສະລິ

1. ເງື່ອນໄຂການສຳລັບຜູ້ປະກອບການຂີ່ສະລິ

1.1. ການດຳເນີນທຸລະກິດການທ່ອງທ່ຽວ

- ຜູ້ປະກອບການ ຕ້ອງມີໃບອະນຸຍາດຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ.
- ຜູ້ປະກອບການຕ້ອງໄດ້ວ່າຈ້າງບໍລິສັດ ຫຼື ຜູ້ຊ່ຽວຊານໃນການຕິດຕັ້ງລະບົບສາຍສະລິ (ມີໃບຢັ້ງຢືນ)
- ຜູ້ປະກອບການ ຕ້ອງມີໃບທະບຽນວິສະຫະກິດ, ໃບອະນຸຍາດດຳເດີນທຸລະກິດ, ໃບຢັ້ງຢືນການນຳໃຊ້ທີ່ດິນ, ໃບຢັ້ງຢືນສິ່ງແວດລ້ອມ, ໃບຢັ້ງຢືນກວດກາເຕັກນິກ ແລະ ອຸປະກອນ; ແລະ ປະກັນໄພ ຫຼື ປະກັນຊີວິດ, ທີ່ຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງ.
- ມີແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ.
- ຕ້ອງຈັດຕັ້ງປະຕິບັດກິດຈະກຳຕ່າງໆ ໃຫ້ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ.
- ຕ້ອງເສຍພັນທະ ຕໍ່ພາກລັດຢ່າງເປັນປົກກະຕິ ເຊັ່ນ: ເສຍອາກອນ, ພັນທະດ້ານສິ່ງແວດລ້ອມ, ກອງທຶນການທ່ອງທ່ຽວ ຕາມລະບຽບ ແລະ ໄລຍະເວລາທີ່ກຳນົດໄວ້.
- ບໍ່ເຄີຍຖືກດຳເນີນຄະດີໃດໆ ມາກ່ອນ.
- ຕ້ອງໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມໃນຮູບແບບຕ່າງໆ.
- ຕ້ອງໃຫ້ປະຊາຊົນທ້ອງຖິ່ນມີສ່ວນຮ່ວມ.

1.2. ການບໍລິຫານ ແລະ ຄຸ້ມຄອງ

- ສ້າງລະບຽບການບໍລິຫານຄຸ້ມຄອງພະນັກງານ, ຜູ້ມາໃຊ້ບລິການ, ນະໂຍບາຍຕ່າງໆ ຂອງບໍລິສັດ ແລະ ມີມາດຕະການທີ່ເໝາະສົມຕໍ່ຜູ້ລະເມີດ.
- ສ້າງປ້າຍແນະນຳສຳລັບນັກທ່ອງທ່ຽວ ເຊັ່ນ: ທາງເຂົ້າໄປໃນເຂດບໍລິການຂີ່ສະລິ ແລະ ລຽບຕາມບໍລິເວນນັ້ນ ໂດຍທີ່ນັກທ່ອງທ່ຽວສາມາດເບິ່ງເຫັນໄດ້ ຫຼື ທຸກຄົນທີ່ກຳລັງຈະຂຶ້ນຂີ່.
- ສ້າງແຜນທີ່ລວມວົງຈອນການຂີ່ສະລິ ແລະ ແຕ່ລະສະຖານນິສະເພາະ.
- ສ້າງສະຖານທີ່ທົດລອງການຂີ່ສະລິ ກ່ອນຂຶ້ນຂີ່ສະລິ່ງຕົວຈິ່ງ.
- ສ້າງແບບຟອມ ແລະ ກຳນົດເງື່ອນໄຂຜູ້ທີ່ໃຊ້ບໍລິການຂີ່ສະລິງຕ້ອງໄດ້ຍິນຍອມປະກອບແບບຟອມກ່ອນຂຶ້ນຂີ່ສະລິງທຸກຄັ້ງ.
- ຕ້ອງມີການເກັບກຳສະຖິຕິນັກທ່ອງທ່ຽວ ທີ່ມາໃຊ້ບໍລິການສະລິງໃນແຕ່ລະວັນ ໂດຍແຍກສັນຊາດ, ເພດ ແລະ ອາຍຸ.
- ມີຄະນະວິຊາການ ລົງຕິດຕາມກວດກາສາຍສະລິງ, ຕົ້ນໄມ້ໃນແຕ່ລະສະຖານນິ ແລະ ອຸປະກອນຄວາມປອດໄພຕ່າງໆ ກ່ອນໃຫ້ບໍລິການທຸກໆມື້ ຢ່າງເປັນປົກກະຕິ.
- ກຳນົດເວລາໃນການບໍລິການສະລິງ ແຕ່ເວລາ 8:00-17:00 ໂມງ.

- ກຳນົດຈຳນວນນັກທ່ອງທ່ຽວ ທີ່ເຂົ້າມາໃຊ້ບໍລິການສະລິງໃນແຕ່ລະຖ້ຽວ ພ້ອມດ້ວຍວິຊາການບໍລິການສະລິງ (ຜູ້ນຳທ່ຽວ) ໃນແຕ່ຄັ້ງ ອີງຕາມຄວາມສາມາດ ໃນການຮອງຮັບຂອງການບໍລິການເຊັ່ນ: ທຸກໆຄັ້ງໃນການໃຫ້ບໍລິການຈະຕ້ອງມີ ວິຊາການບໍລິການສະລິງ (ຜູ້ນຳທ່ຽວ) 2 ຄົນຂຶ້ນໄປ.

1.3. ການຄຸ້ມຄອງສິ່ງແວດລ້ອມ

- ການພັດທະນາເຂດໃຫ້ບໍລິການສະລິງ ຕ້ອງຫຼີກລ້ຽງຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມເຊັ່ນ: ການຕັດຕົ້ນໄມ້ຕາມແລວສາຍສະລິງ, ທາງຍ່າງໄປຫາແຕ່ລະສະຖານນີ, ການຕິດຕັ້ງສະຖານນີ **(Platform)**.
- ຕ້ອງໃຫ້ຄວາມຮູ້ແກ່ນັກທ່ອງທ່ຽວກ່ຽວກັບການຮັກສາລະບົບນິເວດ, ການອະນຸລັກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ
- ຫ້າມບໍ່ໃຫ້ນຳເອົາອາຫານ-ເຄື່ອງດື່ມ ແລະ ອຸປະກອນທີ່ບໍ່ຈຳເປັນ ເຂົ້າໄປໃນສະຖານນີບໍລິການສະລິງແຕ່ລະຈຸດ ຊຶ່ງຈະກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ສະພາບແວດລ້ອມ ແລະ ຄວາມປອດໄພຂອງນັກທ່ອງທ່ຽວ
- ຕ້ອງຈັດສັນພື້ນທີ່ ສຳລັບການເກັບມ້ຽນຂີ້ເຫຍື້ອ (ແບບແຍກປະເພດ) ຢູ່ບໍລິເວນຈຸດໃຫ້ບໍລິການສະລິງ
- ຕ້ອງກຳນົດແຜນບຳລຸງຮັກສາຕົ້ນໄມ້ ທີ່ຕິດຕັ້ງສະລິງ ແລະ ສະຖານນີ ພ້ອມທັງປູກຕົ້ນໄມ້ທົດແທນໃນເຂດບໍລິການສະລິງຂອງຕົນ
- ຕ້ອງມີແຜນການຄຸ້ມຄອງສິ່ງແວດລ້ອມໃນໄລຍະຍາວ.

2. ເງື່ອນໄຂ ແລະ ໜ້າທີ່ຂອງຜູ້ໃຫ້ການບໍລິການສະລິງ (ຜູ້ນຳທ່ຽວ)

2.1. ເງື່ອນໄຂຂອງພະນັກງານທີ່ຈະບໍລິການສະລິງ

- ເປັນຜູ້ທີ່ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ
- ບໍ່ມີສະພາບພິການ ຫຼື ເສຍອົງຄະ
- ເປັນຄົນສັນຊາດລາວ ໂດຍສະເພາະແມ່ນຄົນໃນທ້ອງຖິ່ນ
- ນ້ຳໜັກບໍ່ຫຼຸດ 50 ກິໂລກຣາມ ແລະ ບໍ່ເກີນ 125 ກິໂລກຣາມ
- ມີລວງສູງ ບໍ່ຫຼຸດ 150 ຊັງຕີແມັດ
- ພະນັກງານທີ່ຈະໃຫ້ບໍລິການໃນການຂີ່ສະລິງ ຕ້ອງໄດ້ຜ່ານການຝຶກອົບຮົມສະເພາະທາງ ແລະ ມີໃບຢັ້ງຢືນຮັບຮອງ

2.2. ໜ້າທີ່ຂອງພະນັກງານບໍລິການສະລິງ (ຜູ້ນຳທ່ຽວ)

- ທຸກໆມື້ພະນັກງານບໍລິການສະລິງຕ້ອງກວດການ໋ອດ, ສາຍສະລິງ ແລະ ອຸປະກອນຕ່າງໆ ກ່ອນໃຫ້ບໍລິການແກ່ລູກຄ້າ.

- ພະນັກງານບໍລິການສະລິງ ຕ້ອງໃສ່ຊຸດເຄື່ອງແບບຂອງບໍລິສັດ ພ້ອມທັງໃສ່ເກີບທີ່ຫຸ້ມຫໍ່ຕີນເປັນຢ່າງດີ.

- ພະນັກງານບໍລິການສະລິງ ຕ້ອງໃສ່ຊຸດນິລະໄພໃນການຂີ່ສະລິງໃຫ້ລູກຄ້າ ແລະ ຫ້າມເດັດຂາດ ບໍ່ໃຫ້ຜູ້ອື່ນ ໂດຍບໍ່ແມ່ນພະນັກງານ ບໍລິການສະລິງພາຍໃນບໍລິສັດໃສ່ຊຸດໃຫ້ແກ່ລູກຄ້າຢ່າງເດັດຂາດ.

- ພະນັກງານບໍລິການສະລິງ ຕ້ອງໃຫ້ລູກຄ້າທຸກຄົນຍິນຍອມ ຂຽນ ແລະ ເຊັນຊື່ ໃສ່ແບບຟອມທີ່ ທາງບໍລິສັດໄດ້ກຳນົດອອກ ກ່ອນການບໍລິການຂີ່ສະລິ່ງ.

- ພະນັກງານບໍລິການສະລິງ ຕ້ອງແນະນຳ ຫຼື ສາທິດວິທີການຂີ່ສະລິງໃຫ້ແກ່ລູກຄ້າເຂົ້າໃຈ ກ່ອນການຂີ່ສະລິງຕົວຈິງ.

- ຈາກຈຸດເລີ້ມຕົ້ນ ຈົນເຖິງປາຍທາງ ພະນັກງານບໍລິການສະລິງ ຕ້ອງລັອກສາຍຮັດ (ສາຍເຊັບຕີ່) ໃຫ້ແກ່ລູກຄ້າເພື່ອ ຄວາມປອດໄພ.

- ພະນັກງານບໍລິການສະລິງ ຕ້ອງໄດ້ກວດສອບຄວາມປອດໄພ (ສະພາບຂອງນັກທ່ອງທ່ຽວ) ພະນັກງານຈະຕ້ອງເກາະ **ກາຣາບິນເນີ (Karabiner)** ສອງອັນໃສ່ **ຮານເນດສ (Harness)** ຂອງນັກທ່ອງທ່ຽວ, ໃນໄລຍະດຳເນີນກິດຈະກຳ.

- ຜູ້ທີ່ປ່ອຍລູກຄ້າອອກຈາກຈຸດເລີ້ມຕົ້ນ ຕ້ອງໄດ້ຮັບສັນຍານຈາກປາຍທາງ ຈຶ່ງສາມາດປ່ອຍລູກຄ້າອອກໄດ້.

- ພະນັກງານບໍລິການສະລິງທຸກຄົນ ຈະຕ້ອງໄດ້ນຳໃຊ້ເຄື່ອງມື ວິທະຍຸສື່ສານ(ໂຟນີ) ໃນການສື່ສານເຊິ່ງກັນ ແລະ ກັນເພື່ອມຄວາມສະດວກ.

- ພະນັກງານບໍລິການສະລິງ ຕ້ອງຮັກສາຄວາມສະອາດ, ຫ້າມຖິ້ມຂີ້ເຫຍື້ອຊະຊາຍ ພ້ອມທັງເກັບມ້ຽນສິ່ງເສດເຫຼືອຕາມຂອບເຂດທີ່ທາງບໍລິສັດກຳນົດ.

- ພະນັກງານບໍລິການສະລິງທຸກຄົນ ຕ້ອງມາວຽກກ່ອນເວລາການເປີດບໍລິການເປັນປົກກະຕິ ເພື່ອກະກຽມອຸປະກອນ ແລະ ກວດກາຄວາມປອດໄພ ໃນເວລາບໍລິການ

- ຖ້າພະນັກງານບໍລິການສະລິງ ມີວຽກຈຳເປັນບໍ່ໄດ້ມາວຽກ ຕ້ອງໂທຄອບກ່ອນເວລາໃຫ້ບໍລິການແກ່ລູກຄ້າ ເພື່ອຈັດສັນພະນັກງານຄົນອື່ນມາປ່ຽນແທນ.

2.3. ຂໍ້ຫ້າມສຳລັບພະນັກງານບໍລິການສະລິງ (ຜູ້ນຳທ່ຽວ)

- ຫ້າມພະນັກງານບໍລິການສະລິງທຸກຄົນ ໃຫ້ບໍລິການສະລິງກັບຄົນນອກທີ່ບໍ່ໄດ້ຊື້ລາຍການ ແລະ ລົງທະບຽນຂີ່ສະລິງ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຈາກບໍລິສັດ.

- ຫ້າມພະນັກງານບໍລິການສະລິງ ດື່ມຂອງມຶນເມົາກ່ອນ ຫຼື ໃນເວລາການບໍລິການລູກຄ້າຂີ່ສະລິງ.

- ຫ້າມພະນັກງານສະລິງ ສອຍໂອກາດກັບລູກຄ້າດ້ວຍການກະທຳຕ່າງໆຢ່າງເດັດຂາດ.

- ຫ້າມພະນັກງານສະລິງ ໃຊ້ຄຳເວົ້າຈາທີ່ບໍ່ສຸພາບກັບລູກຄ້າ ແລະ ສອຍໂອກາດລ່ວງລະເມີດທາງເພດຕໍ່ລູກຄ້າທີ່ມາໃຊ້ບໍລິການ.

- ຕ້ອງໃຫ້ບໍລິການການຂີ່ສະລິງ ຕາມທີ່ບໍລິສັດກຳນົດໃຫ້ຢ່າງເຂັ້ມງວດ.

- ຫ້າມ ບໍ່ໃຫ້ຫຼີ້ນການພະນັນທຸກປະເພດຢູ່ບໍລິເວນເຂດບໍລິການຂີ່ສະລິ່ງຢ່າງເດັດຂາດ.
- ຫ້າມບໍ່ໃຫ້ບໍລິການສະລິ່ງໃນເວລາຝົນຕົກ, ມີປະກົດການ ຟ້າຮ້ອງ-ຟ້າເຫຼື້ອມ-ຟ້າຜ່າ ໃນ ສະຖານທີ່ ແລະ ບໍລິເວນໃກ້ຄຽງ

3. ເງື່ອນໄຂ ແລະ ໜ້າທີ່ຂອງຜູ້ໃຊ້ບໍລິການ (ນັກທ່ອງທ່ຽວ)

3.1. ເງື່ອນໄຂຂອງຜູ້ທີ່ຈະໃຊ້ບໍລິການສະລິ່ງ

- ນັກທ່ອງທ່ຽວຕ້ອງມີຄວາມສູງ 110 ຊັງຕີແມັດ ຫຼື ມີອາຍຸ 10 ປີ ຂຶ້ນໄປ
- ກໍລະນີນັກທ່ອງທ່ຽວມີອາຍຸ 6-9 ປີ ຕ້ອງມີພະນັກງານ(ຜູ້ນຳທ່ຽວ) ຂີ່ໄປນຳ
- ນັກທ່ອງທ່ຽວຕ້ອງນ້ຳໜັກລະຫວ່າງ (37,5-125 ກິໂລກຣາມ)
- ບຸກຄົນໃດທີ່ຢ້ານຄວາມສູງ ແມ່ນບໍ່ຄວນໃຫ້ຂີ່ສະລິ່ງ
- ບໍ່ອະນຸຍາດໃຫ້ຄົນພິການ ໃສ່ຂາທຽມຂີ່ສະລິ່ງ
- ບໍ່ອະນຸຍາດໃຫ້ແມ່ຍິງຖືພາ / ແມ່ມານ ຂີ່ສະລິ່ງ
- ບໍ່ອະນຸຍາດໃຫ້ຜູ້ທີ່ປັນຫາກ່ຽວກັບຄໍ ແລະ ຫລັງ ຂີ່ສະລິ່ງ
- ບໍ່ອະນຸຍາດໃຫ້ຜູ້ທີ່ເປັນໂລກຫົວໃຈ ຂີ່ສະລິ່ງ
- ບໍ່ອະນຸຍາດໃຫ້ຜູ້ທີ່ມີຄວາມດັນເລືອດສູງ ຂີ່ສະລິ່ງ
- ບໍ່ອະນຸຍາດໃຫ້ຜູ້ທີ່ຜ່ານການຜ່າຕັດໃໝ່ ຂີ່ສະລິ່ງ
- ບໍ່ອະນຸຍາດໃຫ້ຜູ້ທີ່ມີພະຍາດຕິດແປດ ຂີ່ສະລິ່ງ

3.2. ໜ້າທີ່ຂອງຜູ້ທີ່ໃຊ້ບໍລິການສະລິ່ງ

- ຜູ້ໃຊ້ບໍລິການສະລິ່ງ ຕ້ອງປະຕິບັດຕາມຄຳແນະນຳຂອງພະນັກງານບໍລິການສະລິ່ງ ຢ່າງເຂັ້ມງວດ ເພື່ອຄວາມປອດໄພໃນການເຮັດກິດຈະກຳ
- ຜູ້ໃຊ້ບໍລິການສະລິ່ງ ຕ້ອງຍິນຍອມເຊັນແບບຟອມ ກ່ຽວກັບເງື່ອນໄຂຕ່າງໆ ຂອງການຂີ່ສະລິ່ງທີ່ ບໍລິສັດໄດ້ກຳນົດ
- ຜູ້ໃຊ້ບໍລິການສະລິ່ງ ຖ້າມີຜົມຍາວຕ້ອງໄດ້ມັດ ຫຼື ເປຍໄວ້ທາງຫຼັງ
- ອະໄວຍະວະ ແຂນ, ຂາ ທຸກຂ້າງຂອງຜູ້ໃຊ້ບໍລິການສະລິ່ງ ຈະຕ້ອງວາງໃນທ່າທີ່ເໝາະສົມຕາມ ຄຳແນະນຳຂອງພະນັກງານບໍລິການສະລິ່ງ
- ຜູ້ໃຊ້ບໍລິການສະລິ່ງ ຄວນນຸ່ງເຄື່ອງທີ່ເໝາະສົມ ໃນການເຮັດກິດຈະກຳ ບໍ່ຄວນນຸ່ງສັ້ນ, ຮັດຮູບ ຫຼື ໃຫຍ່ເກີນໄປ ເຊັ່ນ: ບໍ່ໃຫ້ນຸ່ງສີ້ນ, ກະໂປ່ງ ຫຼື ຊຸດບີກີນີ.
- ໃສ່ເກີບທີ່ຫຸ້ມຫໍ່ຕີນໃນຂະນະທີ່ຂີ່ສະລິ່ງ
- ຖ້າພົບເຫັນອຸປະກອນມີການເປ່ເພ ຫຼື ເສຍຫາຍ ຕ້ອງແຈ້ງໃຫ້ແກ່ພະນັກງານຜູ້ທີ່ໃຫ້ບໍລິການໃນ ບໍລິເວນນັ້ນໂດຍທັນທີ

- ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 8 ປີ ຕ້ອງຢູ່ໃນການເບິ່ງແຍງຂອງຜູ້ໃຫຍ່ ໃນຂະນະທີ່ນຳໃຊ້ບໍລິການຂີ່ສະລິງ
- ຫ້າມບໍ່ໃສ່ເຄື່ອງປະດັບທີ່ມີລາຄາສູງເຊັ່ນ: (ເພັດ, ພອຍ, ຄຳ ຫຼື ໂມງ) ໃນຂະນະທີ່ຂີ່ສະລິງ
- ຫ້າມບໍ່ໃຫ້ປົດລ໋ອກ ອຸປະກອນຂອງຜູ້ໃຊ້ບໍລິການສະລິງດ້ວຍຕົນເອງຢ່າງເດັດຂາດ ເພາະມັນເປັນຄວາມຮັບຜິດຊອບຂອງ ພະນັກງານບໍລິການພຽງຜູ້ດຽວ.
- ເວລາຂີ່ສະລິງຫ້າມບໍ່ໃຫ້ເອົາທາງຫຼັງໄປໜ້າ ຫຼື ຂ້ວມໜ້າລົງ
- ຫ້າມບໍ່ໃຫ້ບຸກຄົນທີ່ຢູ່ໃນສະພາບເມົາຢາເສບຕິດ ຫຼື ເຫຼົ້າ ໃຊ້ບໍລິການຂີ່ສະລິງ

4. ເງື່ອນໄຂການໃຫ້ບໍລິການ, ອຸປະກອນຊ່ວຍປະຖົມພະຍາບານຂັ້ນຕົ້ນ

ການໃຫ້ບໍລິການ ແລະ ການປະຖົມພະຍາບານເບື້ອງຕົ້ນສຳລັບກິດຈະກຳການຂີ່ສະລິງ ຕ້ອງປະກອບດ້ວຍ:

- ມີຊຸດປະຖົມພະຍາບານເບື້ອງຕົ້ນ ໂດຍທົ່ວໄປ ປະກອບມີ: ມີດຕັດ, ຜ້າພັນບາດແຜ, ນ້ຳຢາຂ້າເຊື້ອ, ຖົງມືອະນາໄມ, ພາສເຕີ້, ຢາແກ້ປວດ, ຢາແກ້ອາການແພ້ ແລະ ອື່ນໆ...

- ຕ້ອງມີພະນັກງານ ທີ່ໄດ້ຜ່ານການຝຶກອົບຮົມກ່ຽວກັບການປະຖົມພະຍາບານເບື້ອງຕົ້ນ ຢ່າງໜ້ອຍ 2 ຄົນ.

- ອຸປະກອນຮັບໃຊ້ ໃນກໍລະນີການເຄື່ອນຍ້າຍສຸກເສີນ (ເປຫາມ) ທີ່ຮັບປະກັນໃນການເຄື່ອນຍ້າຍຄົນເຈັບ ທີ່ອາດເຄື່ອນເໜັງບໍ່ໄດ້ ເຊັ່ນ: ການຢຶດຕົ້ນຄໍ, ຊ່ວງເອິກ ແລະ ຂາ

ຕົວຢ່າງເປຫາມທີ່ມີການຢຶດການເຄື່ອນເໜັງລໍາຄໍ

ຕົວຢ່າງເປຫາມແບບພັບ

- ມີການປະສານງານກັບພາກສ່ວນສາທາລະນະສຸກເມືອງ ແລະ ໜ່ວຍກູ້ໄພທີ່ຢູ່ໃກ້ຄຽງ ຢ່າງເປັນປົກກະຕິ

5. ເງື່ອນໄຂສະຖານທີ່ບໍລິການ, ການຕິດຕັ້ງສະລິງ ແລະ ສະຖານີ

5.1. ເງື່ອນໄຂການເລືອກສະຖານທີ່:

- ສະຖານທີ່ບໍລິການສະລິງ ຕ້ອງໄດ້ຮັບອານຸຍາດເຫັນດີ ຈາກເຈົ້າຂອງສະຖານທີ່ (ເຈົ້າຂອງທີ່ດິນ)
- ສະຖານທີ່ບໍລິການສະລິງ ຕ້ອງໄດ້ຜ່ານການສຳຫຼວດ ແລະ ອະນຸຍາດ ຈາກຄະນະກຳມະການຮັບຜິດຊອບຈາກພາກສ່ວນທີ່ກ່ຽວຂ້ອງ.
- ສະຖານທີ່ບໍລິການສະລິງ ຕ້ອງເປັນສະຖານທີ່ ທີ່ເໝາະສົມ ທີ່ມີໂຄງສ້າງທີ່ແຂງແຮງ ແລະ ໝັ້ນຄົງ (ຕົ້ນໄມ້ຄວນເບິ່ງຄວາມແຂງແຮງເປັນຫຼັກ, ໂຄງສ້າງເຫຼັກຄວນມີຮາກຖານ ແລະ ໂຄງສ້າງທີ່ໝັ້ນຄົງ, ຜາຫີນຄວນມີໂຄງສ້າງທີ່ໝັ້ນຄົງດີ ເປັນຫີນສິລາທີ່ບໍ່ຜ່ອຍ)
- ບໍ່ຄວນສ້າງສາຍສະລິງ ໃກ້ກັບແລວສາຍໄຟຟ້າແຮງສູງ, ສະຖານທີ່ຈະຕິດຕັ້ງ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງສະຖານທີ່ ແລະ ຄະນະກຳມະການ.
- ກໍລະນີສະລິງຕິດຕັ້ງໃສ່ຕົ້ນໄມ້ ຕົ້ນໄມ້ຕ້ອງມີຂະໜາດໜ້າຕັດຕັ້ງແຕ່ 60 ຊັງຕີແມັດຂຶ້ນໄປ ແລະ ຂະໜາດທີ່ເໝາະສົມທີ່ສຸດແມ່ນ 80 – 90 ຊັງຕີແມັດ, ສາມາດເປັນໄມ້ເນື້ອປະສົມ ຫຼື ໄມ້ເນື້ອແຂງກໍ່ໄດ້ ແຕ່

ທີ່ສຳຄັນຕ້ອງບໍ່ງຽງ ຫຼື ມີມຸມທີ່ຕັ້ງທ່ຽງດີ ບໍ່ມີດ້ອງ, ແມງ ຫຼື ມິດ ກັດບໍລິເວນຕົ້ນໄມ້ ແລະ ມີການປ້ອງກັນ ດ້ອງ, ແມງ ຫຼື ມິດ ໃນອະນາຄົດ

5.2. ເງື່ອນໄຂການຕິດຕັ້ງສາຍສະລິງ

ການຕິດຕັ້ງ ຕ້ອງປະຕິບັດໂດຍຜູ້ຊ່ຽວຊານສະເພາະດ້ານເທົ່ານັ້ນ ແລະ ສອດຄ່ອງກັບຄຳແນະນຳ ດັ່ງນີ້:

- ໄລຍະຫ່າງລະຫວ່າງສອງຈຸດ ຄວນຫ່າງເໝາະສົມກັບຄວາມສາມາດ ໃນການຮັບນ້ຳໜັກຂອງ ສາຍສະລິງ, ຄວາມໂຕ່ງ ແລະ ການແກວ່ງໄກວຂອງສະລິງ. ໄລຍະຄວາມສູງ ແລະ ຄວາມໂຕ່ງຂອງສາຍສະລິງ ຈາກຈຸດເລີ່ມຕົ້ນ ຫາຈຸດທີສອງ ຄວນມີຂະໜາດທີ່ເໝາະສົມ ເຊິ່ງມີຄວາມໂຕ່ງບໍ່ເກີນ 20% - 25% ຂອງ ຄວາມຍາວສາຍທັງໝົດ (ເບິ່ງໃນຮູບຕົວຢ່າງ)



ຮູບພາບຕົວຢ່າງ ການຄິດໄລ່ຄວາມຍາວ ແລະ ຄວາມໂຕ່ງ ຂອງສາຍສະລິງ

- ໃນການດຶງຈາກຈຸດເລີ່ມຕົ້ນ (ຈຸດສູງ) ຫາຈຸດສິ້ນສຸດ (ຈຸດຕ່ຳ) ຂອງແຕ່ລະໄລຍະ ຕ້ອງໃຊ້ສາຍ ສະລິງເສັ້ນດຽວ ໝາຍວ່າ: ບໍ່ໃຫ້ມີການຕໍ່ສາຍກາບ ໃນກໍລະນີທີ່ຄວາມຍາວຂອງສາຍບໍ່ເຖິງ; ເພື່ອຮັບປະກັນ ຄຸນນະພາບຂອງສາຍກາຍ ໃຫ້ມີແຮງດຶງສະໝ່ຳສະເໝີຕະຫຼອດສາຍ ເພື່ອຄວາມປອດໄພ.

ຮູບຕົວຢ່າງການຕໍ່ສາຍກາບ

- ສາຍສະລິງ ຕ້ອງໄດ້ຕາມມາດຕະຖານ ISO 2001 (ແຮງດຶງ, ຂະໜາດເສັ້ນຜ່າສູນກາງ 11 ມິລິແມັດ, ສ່ວນປະສົມຂອງແຮ່ທາດ...) ແລະ ຕ້ອງມີການກວດສອບໃຫ່ຍທຸກໆ 6 ເດືອນ, ແລະ ມີການປ່ຽນແທນ ໃນທຸກໆ 9000 - 10,000 ຖ້ຽວ ຫຼື ກໍລະນີທີ່ມີການກວດພົບຄວາມເສຍຫາຍຂອງສາຍສະລິງ ເຊັ່ນ: ການຈີກຂາດຂອງສາບກາບ, ການຟູເປັນຝອຍຂອງສາຍກາບ ແມ່ນໃຫ້ປ່ຽນທັນທີ (ສ່ວນຫຼາຍ ແມ່ນຢູ່ໃກ້ຈຸດໃກ້ສຸດທ້າຍຂອງສາຍ)

- ການດຶງສາຍສະລິງ ຜ່ານຈາກຈຸດເລີ່ມຕົ້ນ ຫາຈຸດສຸດທ້າຍ ແລ້ວຍຶດກັບບ່ອນເກາະ (ຕົ້ນໄມ້, ໂຄງເຫຼັກ, ຫີນ...) ແລ້ວດຶງຄວາມໂຕ່ງຂອງສາຍສະລິງໃຫ້ໄດ້ລະດັບ (20-25%).



- ໃນກໍລະນີສາຍສະລິງມີຄວາມຄ້ອຍຊັນເກີນໄປ ຕ້ອງມີຕີວຊ່ວຍເບກ ໃນຈຸດປາຍ



ຮູບຕົວຢ່າງເບກເກຍ

ຮູບຕົວຢ່າງເບກແບບສະປິງ

- ການຮັດສາຍສະລິງກັບຕົ້ນໄມ້ ຕ້ອງໄດ້ມີໝອນຮອງລະຫ່ວ່າງສາຍສະລິງກັບຕົ້ນໄມ້ຄັກແນ່ (ບໍ່ວ່າຈະເຮັດຈາກໄມ້ເນື້ອແຂງ ຫຼື ພຣາດສະຕິກ) ເພື່ອໃຫ້ຕົ້ນໄມ້ສາມາດຂະຫຍາຍຕົວຕໍ່ໄປໄດ້ ພ້ອມທັ້ງເປັນການກະຈາຍແຮງໃນການຮັບນ້ຳໜັກໃຫ້ແກ່ຕົ້ນໄມ້ (ເບິ່ງຕາມຮູບຕົວຢ່າງ)

ຮູບຕົວຢ່າງໝອນແບບຢາງ

ຮູບຕົວຢ່າງໝອນແບບໄມ້

- ຕ້ອງກ້ຽວອ້ອມຕົ້ນໄມ້ 3 ຮອບ ແລ້ວມີການຍຶດປີກຂອງສາຍສະລິງ, ເພື່ອປ້ອງກັນການແກວ່ງຂອງສາຍສະລິງ, ຫຼັງຈາກຍຶດກັບຕົ້ນໄມ້ 3 ຮອບແລ້ວ ຕ້ອງຈົ່ງສິ້ນຂອງສາຍສະລິງໄວ້ປະມານ 2 - 3 ແມັດ ແລ້ວກ້ຽວສາຍດັ່ງກ່າວກັບມາເຮັດສາຍຍຶດເພື່ອຮັກສາຄວາມປອດໄພຂອງນັກທ່ອງທ່ຽວ (ບ່ອນເກາະສາຍເຊບ) ນອກຈາກນີ້ການຈົ່ງສິ້ນດັ່ງກ່າວຍັງຊ່ວຍຮັບປະກັນກໍລະນີກົບລັອກສາຍຫຼັກເກີດການຫຼົ່ນ ຫຼື ມີການເຄື່ອນທີ່

ຮູບຕົວຢ່າງກ້ຽວອ້ອມຕົ້ນໄມ້ 3 ຮອບ



ຮູບຕົວຢ່າງຈົ່ງສິ້ນຂອງສາຍສະລິງໄວ້ປະມານ 2 – 3 ແມັດ ແລ້ວກ້ຽວສາຍໄວ້

- ໝອນຮອງທີ່ເຮັດດ້ວຍໄມ້ຕ້ອງມີ ຂະໜາດ 10X10ຊັງຕີແມັດ, ມີຄວາມຍາວ 30-50ຊັງຕີແມັດ ແລະ ມີໄລຍະຫ່າງກັນ 10 -20 ຊັງຕີແມັດ ພ້ອມທັງຍຶດສິ້ນເບື້ອງເທິງ ແລະ ລຸ່ມຂອງໝອນຮອງ
- ການຮັດສາຍສະລິງເຂົ້າກັນຕ້ອງໃສ່ກົບຮັດ ບໍ່ໃຫ້ໜຸດ 3 ຈຸດ ຂຶ້ນໄປ ແລະ ຫັນນອດໃຫ້ແໜ້ນດີ ການລ໋ອກກົບ ຕ້ອງໃຫ້ສິ້ນທີ່ສັ້ນ (ສິ້ນທີ່ຕັດ) ວາງເທິງເສັ້ນສະລິງ ແລ້ວລ໋ອກກົບໂຕທຳອິດໃຫ້ແໜ້ນດີ ຈາກນັ້ນກ່ໍລ໋ອກກົບໂຕທີສອງ ແລະ ໂຕທີສາມ ຕາມລຳດັບ ເຊິ່ງມີໄລຍະຫ່າງຂອງກົບແຕ່ລະໂຕປະມານ 7 – 15 ຊັງຕີແມັດ ຫຼື ໄລຍະຂອງຮອຍຕ່ຳ ບໍ່ໜຸດ 50 ຊັງຕີແມັດ ສິ້ນຂອງສາຍສະລິງທຸກບ່ອນ ຕ້ອງມີວັດສະດຸຫຸ້ມຫໍ່ ແລະ ຄຽນດ້ວມແຜນພາດສະຕິກໃຫ້ແໜ້ນດີເພື່ອຄວາມປອດໄພ (ເບິ່ງຕາມຮູບຕົວຢ່າງ).



ຮູບພາບຕົວຢ່າງການຮັດສາຍສະລິງດ້ວຍກົບລ໋ອກ

- ເມື່ອການຕິດຕັ້ງສາຍສະລິງສຳເລັດແລ້ວ ກ່ອນຈະໃຫ້ບໍລິການຕ້ອງໄດ້ມີການທົດລອງນຳໃຊ້ວັດສະດຸທີ່ມີນ້ຳໜັກເທົ່າກັບນ້ຳໜັກເບົາສຸດ ແລະ ສູງສຸດຂອງນັກທ່ອງທ່ຽວທີ່ອະນຸຍາດໃຫ້ຂີ່ ຄື: 37,5 ກິໂລກຣາມ ແລະ 125 ກິໂລກຣາມ ຫ້ອຍກັບອຸປະກອນ ໄປຕາມສາຍສະລິງ ເພື່ອທົດສອບເບິ່ງຄວາມໂຕ່ງຂອງສາຍສະລິງ ຄວາມແໜ້ນຂອງການຍຶດນ໊ອດຕ່າງໆ ແລະ ຄວາມສາມາດໃນການຮັບນ້ຳໜັກຂອງສາຍສະລິງ ແລ້ວຄ່ອຍໃຫ້ພະນັກງານທົດສອບອີກເທື່ອໜຶ່ງ ເພື່ອຄວາມປອດໄພ.



ຮູບພາບການທົດລອງຄວາມໂຕ່ງຂອງສາຍສະລິງ ກ່ອນການບໍລິການ

ຮູບພາບການທົດລອງຂີ່ສະລິງ

1. **<u>ໝາຍເຫດ:</u>** ການດຶງສາຍສະລິງເພື່ອໃຫ້ໄດ້ຄວາມໂຕ່ງ 20 – 25 % ກໍລະນີເຮົາໃຊ້ໝາກລ້ອກ 5 ໂຕນ:

- ສຳລັບສາຍສະລິງທີ່ມີຄວາມຍາວໜ້ອຍກວ່າ 300 ແມັດ ແມ່ນດຶງດ້ວຍຄວາມແຮງຢູ່ທີ່ 2,5 - 3 ໂຕນ
- ສຳລັບສາຍສະລິງທີ່ມີຄວາມຍາວຕັ້ງແຕ່ 300 – 500 ແມັດ ແມ່ນດຶງທີ່ຄວາມແຮງ 3 – 3,5 ໂຕນ

- ສຳລັບສາຍສະລິງທີ່ມີຄວາມຍາວຕັ້ງແຕ່ 500 ແມັດຂຶ້ນໄປ ແມ່ນດຶງດ້ວຍຄວາມແຮງທີ່ 3,5 – 4 ໂຕນ.

ຮູບພາບຕົວຢ່າງ ການເຂັ້ງສາຍສະລິງ

5.3. ເງື່ອນໄຂການສ້າງ ແລະ ຕິດຕັ້ງສະຖານີ (Platform)

- ສະຖານີ (ຈຸດຮັບ-ຈຸດປ່ອຍ) ຕ້ອງສ້າງຈາກວັດສະດຸທີ່ມີຄວາມແຂງແຮງ ແລະ ທົນທານຕໍ່ສະພາບແວດລ້ອມ ເພື່ອຮັບປະກັນ ບໍ່ມີການໂດກຜ່ອຍ ຫຼື ແຕກຫັກ

- ມີໂຄງສ້າງທີ່ແຂງແຮງ ພ້ອມທັງມີການຍຶດເກາະທີ່ເໝາະສົມ

- ມີເນື້ອທີ່ພຽງພໍສຳລັບນັກທ່ອງທ່ຽວທີ່ມາເຖິງ ແລະ ຢືນລໍຖ້າສຳລັບໄປຕໍ່ ມີລັດສະໝີອອກຈາກຕົ້ນໄມ້ ບໍ່ໃຫ້ໜຸດ 1 ແມັດ ຫຼື ມີຂະໜາດບໍ່ໃຫ້ໜຸດ 4 ແມັດມົນທົນ ໃນກໍລະນີບໍ່ຢູ່ເທິງຕົ້ນໄມ້

- ຕ້ອງມີອຸປະກອນປ້ອງກັນການບາດເຈັບຕິດໄວ້ໃນຈຸດທີ່ເສັ້ນສະລິງເຂົ້າມາຮອດ ພ້ອມທັງມີຈຸດຍຶດສາຍນິລະໄພ (ບ່ອນເກາະສາຍເຊຍ) ເພື່ອໃຫ້ນັກທ່ອງທ່ຽວໄດ້ເກາະໄວ້ ໃນໄລຍະລໍຖ້າ

ພາບຕົວຢ່າງອຸປະກອນປ້ອງກັນການບາດເຈັບ

ຮູບພາບຕົວຢ່າງຈຸດຢຶດສາຍນິລະໄພ

- ຕ້ອງມີຮາວພະນັກກັນຕົກ ປ້ອງກັນອັນຕະລາຍທີ່ອາດຈະເກີດຂຶ້ນ

ຮູບພາບຕົວຢ່າງຮາວກັນຕົກ

- ໄລຍະຄວາມສູງລະຫວ່າງພື້ນຂອງສະຖານີ ຫາ ສາຍສະລິງ ທີ່ໃຊ້ຂີ່ ຕ້ອງຢູ່ລະຫວ່າງ 160 – 170 ຊັງຕີແມັດ

6. ເງື່ອນໄຂອຸປະກອນຂອງຜູ້ໃຊ້ບໍລິການສະລິງ

ອຸປະກອນສຳລັບຜູ້ນຳໃຊ້ບໍລິການສະລິງປະກອບດ້ວຍ:

1) ໝວກກັນກະທົບ

- ຕ້ອງໄດ້ມາດຕະຖານ ແລະ ເປັນໝວກສະເພາະສຳລັບການຂີ່ສະລິ່ງ
- ມີສາຍຮັດຄາງ
- ມີສະພາບສົມບູນ ບໍ່ມີການແຕກແຫ້ງ

2) ຖົງມື

- ເຮັດຈາກວັດສະດຸທີ່ຢືດຫົດໄດ້ງ່າຍ ແລະ ລະບາຍອາກາດໄດ້ດີ
- ມີຄວາມສະອາດ ບໍ່ມີກິ່ນເໝັນອັບ
- ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)

3) ຊຸດສຳລັບຂີ່ສະລິ່ງ

- ມີສາຍຮັດ, ສາຍຈ່ອງ ແລະ ຊຸດການຮັດ-ການລ້ອກ ທີ່ໄດ້ມາດຕະຖານຂອງການຂີ່ສະລິ່ງ
- ມີຄວາມສະອາດ

- ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)
- ມີອາຍຸການໃຊ້ງານທີ່ຊັດເຈນ ຫຼື ມີຄວາມສາມາດໃນການນຳໃຊ້ໄດ້ດີຢູ່ສະເໝີ

4) ອຸປະກອນຮັບໃຊ້ການຂີ່ສະລິ່ງ
- ເປັນອຸປະກອນທີ່ໄດ້ຮັບການຮັບຮອງ ແລະ ຢັ້ງຢືນ ຈາກບໍລິສັດຜູ້ຜະລິດ ສຳລັບການຂີ່ສະລິ່ງ
- ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)
- ມີອາຍຸການໃຊ້ງານທີ່ຊັດເຈນ ຫຼື ມີຄວາມສາມາດໃນການນຳໃຊ້ໄດ້ດີຢູ່ສະເໝີ
- ບໍ່ມີການເປ່ເພ

5) ເກີບທີ່ຫຸ້ມຫໍ່ປົກປິດຕີນ
- ເຮັດຈາກວັດສະດຸທີ່ຢືດໜີດໄດ້ງ່າຍ ແລະ ລະບາຍອາກາດໄດ້ດີ
- ມີຄວາມສະອາດ ບໍ່ມີກິ່ນເໝັນອັບ

- ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)

ຕາຕະລາງກວດກາ ບັນດາເງື່ອນໄຂ-ມາດຕະຖານ ສຳລັບການບໍລິການຂີ່ສະລິ່ງ

	ບັນດາເງື່ອນໄຂ	ມີ	ບໍ່ມີ
I	**ເງື່ອນໄຂການສຳລັບຜູ້ປະກອບການຂີ່ສະລິ່ງ**		
	1. ການດຳເນີນທຸລະກິດການທ່ອງທ່ຽວ (9)		
1	ປະກອບການຕ້ອງມີໃບອະນຸຍາດຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ		
2	ຜູ້ປະກອບການຕ້ອງມີໃບທະບຽນວິສະຫະກິດ, ໃບອະນຸຍາດດຳເດີນທຸລະກິດ, ໃບຢັ້ງຢືນການນຳໃຊ້ທີ່ດິນ, ໃບຢັ້ງຢືນສິ່ງແວດລ້ອມ,ໃບຢັ້ງຢືນການກວດກາເຕັກນິກ ແລະ ອຸປະກອນ; ແລະ ປະກັນໄພ ຫຼື ປະກັນຊີວິດ, ທີ່ຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງ		
3	ຜູ້ປະກອບການຕ້ອງໄດ້ວ່າຈ້າງບໍລິສັດ ຫຼື ຜູ້ຊ່ຽວຊານໃນການຕິດຕັ້ງລະບົບສາຍສະລິ່ງ (ມີໃບຢັ້ງຢືນ)		
4	ມີແຜນພັດທະນາ ແລະ ຄຸ້ມຄອງສະຖານທີ່ທ່ອງທ່ຽວ		
5	ຕ້ອງຈັດຕັ້ງປະຕິບັດກິດຈະກຳຕ່າງໆ ໃຫ້ສອດຄ່ອງກັບແຜນພັດທະນາການທ່ອງທ່ຽວ		
6	ຕ້ອງເສຍພັນທະຕໍ່ພາກລັດຢ່າງເປັນປົກກະຕິ ເຊັ່ນ: ເສຍອາກອນ,ພັນທະດ້ານສິ່ງແວດລ້ອມ, ກອງທຶນການທ່ອງທ່ຽວ ຕາມລະບຽບ ແລະ ໄລຍະເວລາທີ່ກຳນົດໄວ້		
7	ຜູ້ປະກອບການຕ້ອງບໍ່ເຄີຍຖືກດຳເນີນຄະດີໃດໆມາກ່ອນ		
8	ຕ້ອງໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມໃນຮູບແບບຕ່າງໆ		
9	ຕ້ອງໃຫ້ປະຊາຊົນທ້ອງຖິ່ນມີສ່ວນຮ່ວມ		
	ລວມຄະແນນທັງໝົດມີ 9 ຄະແນນ		
	ອະນຸຍາດຜ່ານ 6 ຄະແນນ		
	2. ການບໍລິຫານ ແລະ ຄຸ້ມຄອງ (9)		
1	ສ້າງລະບຽບການບໍລິຫານຄຸ້ມຄອງພະນັກງານ, ຜູ້ມາໃຊ້ບໍລິການ, ນະໂຍບາຍຕ່າງໆຂອງບໍລິສັດ ແລະ ມີມາດຕະການທີ່ເໝາະສົມຕໍ່ຜູ້ລະເມີດ		
2	ສ້າງປ້າຍຫ້າມ, ປ້າຍແນະນຳ ແລະ ລະບຽບການສຳລັບນັກທ່ອງທ່ຽວເຊັ່ນ : ທາງເຂົ້າໄປໃນເຂດບໍລິການຂີ່ສະລິ່ງ ແລະ ສິ່ງທີ່ຄວນປະຕິບັດໃນເວລາຂີ່ສະລິ່ງ		
3	ສ້າງແຜນທີ່ລວມວົງຈອນການຂີ່ສະລິ່ງ ແລະ ແຕ່ລະສະຖານນີ ສະເພາະ		
4	ສ້າງສະຖານທີ່ທົດລອງການຂີ່ສະລິ່ງ ກ່ອນຂຶ້ນຂີ່ສະລິ່ງຕົວຈິ່ງ		
5	ສ້າງແບບຟອມ ແລະ ກຳນົດເງື່ອນໄຂຜູ້ທີ່ໃຊ້ບໍລິການຂີ່ສະລິ່ງຕ້ອງໄດ້ຍິນຍອມປະກອບແບບຟອມກ່ອນຂຶ້ນຂີ່ສະລິ່ງທຸກຄັ້ງ		
6	ມີການເກັບກຳສະຖິຕິນັກທ່ອງທ່ຽວທີ່ມາໃຊ້ບໍລິການສະລິ່ງໃນແຕ່ລະວັນ ໂດຍແຍກສັນຊາດ, ເພດ ແລະ ອາຍຸ		

7	ມີຄະນະວິຊາການລ້ຽງຕິດຕາມກວດກາສາຍສະລິ່ງ, ຕົ້ນໄມ້ໃນແຕ່ລະສະຖານນີ ແລະ ອຸປະກອນຄວາມປອດໄພຕ່າງໆ ກ່ອນໃຫ້ບໍລິການທຸກໆມື້ຢ່າງເປັນປົກກະຕິ		
8	ກຳນົດເວລາໃນການບໍລິການສະລິ່ງ ແຕ່ເວລາ 8:00-17:00 ໂມງ		
9	ກຳນົດຈຳນວນນັກທ່ອງທ່ຽວທີ່ເຂົ້າມາໃຊ້ບໍລິການສະລິ່ງໃນແຕ່ລະຖ້ຽວ		
	ລວມຄະແນນທັງໝົດມີ 9 ຄະແນນ		
	ອະນຸຍາດຜ່ານ 8 ຄະແນນ		
	3. ການຄຸ້ມຄອງສິ່ງແວດລ້ອມ (6)		
1	ການພັດທະນາເຂດໃຫ້ບໍລິການສະລິ່ງຕ້ອງຫຼີກລ້ຽງຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ		
2	ການໃຫ້ຄວາມຮູ້ແກ່ນັກທ່ອງທ່ຽວກ່ຽວກັບການຮັກສາລະບົບນິເວດຂອງ, ການອະນຸລັກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ມີຄວາມຍືນຍົງ		
3	ຫ້າມບໍ່ນຳເອົາອາຫານ ແລະ ເຄື່ອງດື່ມ ເຂົ້າໄປໃນເຂດຂອງການຂີ່ສະລິ່ງ		
4	ຈັດສັນພື້ນທີ່ສຳລັບການເກັບມ້ຽນຂີ້ເຫຍື້ອ ຢູ່ບໍລິເວນຈຸດໃຫ້ບໍລິການສະລິ່ງ		
5	ມີແຜນບຳລຸງຮັກສາຕົ້ນໄມ້ທີ່ຕິດຕັ້ງສະລິ່ງ ແລະ ສະຖານນີ ພ້ອມທັງປູກຕົ້ນໄມ້ທົດແທນໃນເຂດບໍລິການສະລິ່ງຂອງຕົນ		
6	ມີແຜນການຄຸ້ມຄອງສິ່ງແວດລ້ອມໃນໄລຍະຍາວ		
	ລວມຄະແນນທັງໝົດມີ 6 ຄະແນນ		
	ອະນຸຍາດຜ່ານ 4 ຄະແນນ		
II	**ເງື່ອນໄຂ ແລະ ໜ້າທີ່ຂອງຜູ້ໃຫ້ການບໍລິການສະລິ່ງ (ຜູ້ນຳທ່ຽວ)**		
	1. ເງື່ອນໄຂຂອງພະນັກງານທີ່ຈະບໍລິການສະລິ່ງ (6)		
1	ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ		
2	ບໍ່ມີສະພາບພິການ ຫຼື ເສຍອົງຄະ		
3	ຖືສັນຊາດລາວ ໂດຍສະເພາະແມ່ນຄົນໃນທ້ອງຖິ່ນ		
4	ນ້ຳໜັກບໍ່ໜ້ອຍ ກິໂລກຣາມ 125 ກິໂລກຣາມ ແລະ ບໍ່ເກີນ 50		
5	ມີລວງສູງ ບໍ່ໜ້ອຍ 150 ຊັງຕິແມັດ		
6	ໄດ້ຜ່ານການຝຶກອົບຮົມສະເພາະທາງ ແລະ ມີໃບຢັ້ງຢືນຮັບຮອງ		
	ລວມຄະແນນທັງໝົດມີ 6 ຄະແນນ		
	ອະນຸຍາດຜ່ານ 5 ຄະແນນ		
	2. ໜ້າທີ່ຂອງພະນັກງານບໍລິການສະລິ່ງ (ຜູ້ນຳທ່ຽວ) (12)		
1	ໃນທຸກໆມື້ ຕ້ອງກວດການ໋ອດ, ສາຍສະລິ່ງ ແລະ ອຸປະກອນຕ່າງໆ ກ່ອນບໍລິການແກ່ລູກຄ້າ		
2	ໃສ່ຊຸດເຄື່ອງແບບຂອງບໍລິສັດ ພ້ອມທັງໃສ່ເກີບທີ່ຫຸ້ມຫໍ່ຕີນເປັນຢ່າງດີ.		

3	ໃສ່ຊຸດນິລະໄພໃນການຂີ່ສະລິງໃຫ້ລູກຄ້າ ແລະ ຫ້າມເດັດຂາດບໍ່ໃຫ້ຜູ້ອື່ນໂດຍບໍ່ແມ່ນ ພະນັກງານບໍລິການສະລິງພາຍໃນບໍລິສັດໃສ່ຊຸດໃຫ້ແກ່ລູກຄ້າຢ່າງເດັດຂາດ.		
4	ໃຫ້ລູກຄ້າທຸກຄົນຍິນຍອມ ຂຽນ ແລະ ເຊັນຊື່ໃສ່ແບບຟອມທີ່ທາງບໍລິສັດໄດ້ກຳນົດ ອອກ ກ່ອນການບໍລິການຂີ່ສະລິ່ງ.		
5	ມີການແນະນຳ ຫຼື ສາທິດວິທີການຂີ່ສະລິງໃຫ້ແກ່ລູກຄ້າເຂົ້າໃຈ ກ່ອນການຂີ່ສະລິງຕົວ ຈິ່ງ.		
6	ຈາກຈຸດເລີ້ມຕົ້ນຈົນເຖິງປາຍທາງ ຕ້ອງລ໋ອກສາຍຮັດ (ເຊັບຕີ) ໃຫ້ແກ່ລູກຄ້າເພື່ອ ຄວາມປອດໄພ.		
7	ມີການກວດສອບຄວາມປອດໄພ ສະພາບຂອງນັກທ່ອງທ່ຽວ ກວດການເກາະ ກຣາບິນ ເນີຣ (Karabiner) ສອງອັນໃສ່ ຮານເນີດສ (Harness) ຂອງນັກທ່ອງທ່ຽວ, ໃນ ໄລຍະດຳເນີນກິດຈະກຳ.		
8	ຜູ້ທີ່ປ່ອຍລູກຄ້າອອກຈາກຈຸດເລີ້ມຕົ້ນຕ້ອງໄດ້ຮັບສັນຍານຈາກປາຍທາງຈຶ່ງສາມາດປ່ອຍ ລູກຄ້າອອກໄດ້.		
9	ມີການນຳໃຊ້ເຄື່ອງມື ວິທະຍຸສື່ສານ(ໂຟນີ) ໃນການສື່ສານເຊິ່ງກັນ ແລະ ກັນເພື່ອມ ຄວາມສະດວກ.		
10	ຮັກສາຄວາມສະອາດ, ບໍ່ຖິ້ມຂີ້ເຫຍື້ອຊະຊາຍ ພ້ອມທັງເກັບມ້ຽນສິ່ງເສດເຫຼືອຕາມຂອບ ເຂດທີ່ທາງບໍລິສັດກຳນົດ.		
11	ການປະຕິບັດໂມງເວລາ ທີ່ບໍລິສັດກຳນົດ		
12	ການຄອບ-ການຂາດວຽກ ແລະ ການຈັດສັນຫາພະນັກງານຄົນອື່ນມາປ່ຽນແທນ		
	ລວມຄະແນນທັງໝົດມີ 12 ຄະແນນ		
	ອະນຸຍາດຜ່ານ 9 ຄະແນນ		
	3. ຂໍ້ຫ້າມສຳລັບພະນັກງານບໍລິການສະລິງ (ຜູ້ນຳທ່ຽວ) (7)		
1	ບໍ່ບໍລິການສະລິງໃຫ້ກັບຄົນນອກທີ່ບໍ່ໄດ້ຊື້ລາຍການ ແລະ ລົງທະບຽນຂີ່ສະລິງ ໂດຍທີ່ບໍ່ ໄດ້ຮັບອະນຸຍາດຈາກບໍລິສັດ.		
2	ບໍ່ດື່ມຂອງມຶນເມົາກ່ອນ ຫຼື ໃນເວລາການບໍລິການລູກຄ້າຂີ່ສະລິງ.		
3	ບໍ່ມີການສວຍໂອກາດກັບລູກຄ້າດ້ວຍການກະທຳຢ່າງເດັດຂາດ.		
4	ບໍ່ໃຊ້ຄຳເວົ້າຈາທີ່ບໍ່ສຸພາບກັບລູກຄ້າ ແລະ ບໍ່ສວຍໂອກາດລ່ວງລະເມີດທາງເພດຕໍ່ລູກຄ້າ ທີ່ມາໃຊ້ບໍລິການ.		
5	ຈັດການບໍລິການການຂີ່ສະລິງຕາມບໍລິສັດທີ່ກຳນົດໃຫ້ຢ່າງເຂັ້ມງວດ.		
6	ບໍ່ໃຫ້ຫຼີ້ນການພະນັນທຸປະເພດຢູ່ບໍລິເວນເຂດບໍລິການຂີ່ສະລິງຢ່າງເດັດຂາດ.		
7	ບໍ່ໃຫ້ບໍລິການສະລິງໃນເວລາຝົນຕົກ, ມີປະກົດການຟ້າຮ້ອງ ຟ້າເຫຼື້ອມ ຟ້າຜ່າ ໃນ		

	ບໍລິເວນໃກ້ຄຽງ		
	ລວມຄະແນນທັງໝົດມີ 7 ຄະແນນ		
	ອະນຸຍາດຜ່ານ 7 ຄະແນນ		
III	**ເງື່ອນໄຂ ແລະ ໜ້າທີ່ຂອງຜູ້ໃຊ້ບໍລິການ (ນັກທ່ອງທ່ຽວ)**		
	1. ເງື່ອນໄຂຂອງຜູ້ທີ່ຈະໃຊ້ບໍລິການສະລິ່ງ (11)		
1	ນັກທ່ອງທ່ຽວຕ້ອງມີອາຍຸ 10 ປີຂຶ້ນໄປ ຫຼືມີຄວາມສູງ 110 ຊັງຕີແມັດ ຂຶ້ນໄປ		
2	ກໍລະນີນັກທ່ອງທ່ຽວມີອາຍຸ 6-9 ປີ ຕ້ອງມີພະນັກງານ(ຜູ້ນຳທ່ຽວ) ຂີ່ໄປນຳ		
3	ນັກທ່ອງທ່ຽວຕ້ອງນ້ຳໜັກລະຫວ່າງ (37,5 – 125 ກິໂລກຣາມ)		
4	ບໍ່ອະນຸຍາດໃຫ້ບຸກຄົນທີ່ຢ້ານຄວາມສູງ ຂີ່ສະລິ່ງ		
5	ບໍ່ອະນຸຍາດໃຫ້ຄົນພິການທີ່ໃຊ້ຂາທຽມຂີ່ສະລິ່ງ		
6	ບໍ່ອະນຸຍາດໃຫ້ແມ່ຍິງຖືພາ / ແມ່ມານ ຂີ່ສະລິ່ງ		
7	ບໍ່ອະນຸຍາດໃຫ້ ຜູ້ທີ່ປັນຫາກ່ຽວກັບຄໍ ແລະ ຫລັງ ຂີ່ສະລິ່ງ		
8	ບໍ່ອະນຸຍາດໃຫ້ ຜູ້ທີ່ເປັນໂລກຫົວໃຈ ຂີ່ສະລິ່ງ		
9	ບໍ່ອະນຸຍາດ ໃຫ້ຜູ້ທີ່ມີຄວາມດັນເລືອດສູງ ຂີ່ສະລິ່ງ		
10	ບໍ່ອະນຸຍາດໃຫ້ ຜູ້ທີ່ຫາກຳຜ່ານການຜ່າຕັດໃໝ່ ຂີ່ສະລິ່ງ		
11	ບໍ່ອະນຸຍາດໃຫ້ ຄົນທີ່ມີພະຍາດຕິດແປດ ຂີ່ສະລິ່ງ		
	ລວມຄະແນນທັງໝົດມີ 11 ຄະແນນ		
	ອະນຸຍາດຜ່ານ 6 ຄະແນນ		
	2. ໜ້າທີ່ຂອງຜູ້ທີ່ໃຊ້ບໍລິການສະລິ່ງ (12)		
1	ປະຕິບັດຕາມຄຳແນະນຳຂອງພະນັກງານບໍລິການສະລິ່ງ ຢ່າງເຂັ້ມງວດ ເພື່ອຄວາມປອດໄພຂອງທ່ານໃນການເຮັດກິດຈະກຳ		
2	ຍິນຍອມເຊັນແບບຟອມ ກ່ຽວກັບເງື່ອນໄຂຕ່າງໆ ຂອງການຂີ່ສະລິ່ງທີ່ບໍລິສັດໄດ້ກຳນົດ		
3	ຖ້າມີຜົມຍາວຕ້ອງໄດ້ມັດ ຫຼື ເປຍໄວ້ທາງຫຼັງ		
4	ອະໄວຍະວະ ແຂນ-ຂາ ທຸກຂ້າງຂອງຜູ້ໃຊ້ບໍລິການສະລິ່ງຈະຕ້ອງວາງໃນທ່າທີ່ເໝາະສົມ ຕາມຄຳແນະນຳຂອງພະນັກງານບໍລິການສະລິ່ງ		
5	ນຸ່ງເຄື່ອງທີ່ເໝາະສົມໃນການເຮັດກິດຈະກຳ ບໍ່ຄວນນຸ່ງສັ້ນ, ຮັດ ຫຼື ໃຫຍ່ເກີນໄປ ເຊັ່ນ: ບໍ່ໃຫ້ນຸ່ງສີ້ນ, ນຸ່ງກະໂປ່ງ ຫຼື ຊຸດບີກີນີ.		
6	ໃສ່ເກີບຫຸ້ມຫໍ່ຕີນໃນຂະນະທີ່ຂີ່ສະລິ່ງ		
7	ຖ້າພົບເຫັນອຸປະກອນມີການເປ່ເພ ຫຼື ເສຍຫາຍ ຕ້ອງແຈ້ງໃຫ້ແກ່ພະນັກງານຜູ້ທີ່ໃຫ້ບໍລິການໃນບໍລິເວນນັ້ນໂດຍທັນທີ		
8	ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 8 ປີ ຕ້ອງຢູ່ໃນການເບິ່ງແຍງຂອງຜູ້ໃຫຍ່ໃນຂະນະທີ່ນຳໃຊ້		

	ການຂີ່ສະລິ		
9	ບໍ່ໃສ່ເຄື່ອງປະດັບທີ່ມີລາຄາສູງ ໃນຂະນະທີ່ຂີ່ສະລິ		
10	ຫ້າມບໍ່ໃຫ້ປົດລ່ອກ ອຸປະກອນຂອງຜູ້ໃຊ້ບໍລິການສະລິງດ້ວຍຕົນເອງຢ່າງເດັດຂາດ ເພາະມັນເປັນຄວາມຮັບຜິດຊອບຂອງ ພະນັກງານບໍລິການພຽງຜູ້ດຽວ.		
11	ເວລາຂີ່ສະລິ ຫ້າມບໍ່ໃຫ້ເອົາທາງຫຼັງໄປໜ້າ ຫຼື ຂ້ວມໜ້າລິ		
12	ຫ້າມບໍ່ໃຫ້ບຸກຄົນທີ່ຢູ່ໃນສະພາບເມົາຢາເສບຕິດ ຫຼື ເຫຼົ້າ ຂີ່ສະລິ		
	ລວມຄະແນນທັງໝົດມີ 12 ຄະແນນ		
	ອະນຸຍາດຜ່ານ 7 ຄະແນນ		
IV	**ເງື່ອນໄຂການໃຫ້ບໍລິການ, ອຸປະກອນຊ່ວຍປະຖົມພະຍາບານຂັ້ນຕົ້ນ**		
	1. ອຸປະກອນຊ່ວຍປະຖົມພະຍາບານຂັ້ນຕົ້ນ ແລະ ການແກ້ໄຂເຫດການສຸກເສີນ		
1	ມີຊຸດປະຖົມພະຍາບານເບື້ອງຕົ້ນ		
2	ພະນັກງານຕ້ອງຜ່ານການຝຶກອົບຮົມກ່ຽວກັບການປະຖົມພະຍາບານເບື້ອງຕົ້ນ ຢ່າງໜ້ອຍ 2 ຄົນ.		
3	ອຸປະກອນຮັບໃຊ້ ໃນກໍລະນີການເຄື່ອນຍ້າຍສຸກເສີນ		
4	ມີການປະສານງານກັບພາກສ່ວນສາທາລະນະສຸກເມືອງ ແລະ ໜ່ວຍກູ້ໄພທີ່ຢູ່ໃກ້ຄຽງ ຢ່າງເປັນປົກກະຕິ.		
	ລວມຄະແນນທັງໝົດມີ 4 ຄະແນນ		
	ອະນຸຍາດຜ່ານ 3 ຄະແນນ		
V	**ເງື່ອນໄຂສະຖານທີ່ບໍລິການ, ການຕິດຕັ້ງສະລິ ແລະ ສະຖານີ**		
	1. ເງື່ອນໄຂການເລືອກສະຖານທີ່ (5) :		
1	ສະຖານທີ່ບໍລິການສະລິງຕ້ອງໄດ້ຮັບອານຸຍາດເຫັນດີຈາກເຈົ້າຂອງສະຖານທີ່(ເຈົ້າຂອງທີ່ດິນ)		
2	ສະຖານທີ່ບໍລິການສະລິງຕ້ອງໄດ້ຜ່ານການສຳຫຼວດ ແລະ ອະນຸຍາດຈາກຄະນະກຳມະການຮັບຜິດຊອບຈາກພາກສ່ວນທີ່ກ່ຽວຂ້ອງ		
3	ສະຖານທີ່ບໍລິການສະລິງຕ້ອງເປັນສະຖານທີ່ ທີ່ເໝາະສົມ ທີ່ມີໂຄງສ້າງທີ່ແຂງແຮງ ແລະ ໝັ້ນຄົງ (ຕົ້ນໄມ້ຄວນເບິ່ງຄວາມແຂງແຮງເປັນຫຼັກ), ໂຄງສ້າງເຫຼັກຄວນມີຮາກຖານ ແລະ ໂຄງສ້າງທີ່ໝັ້ນຄົງ, ຜາຫີນຄວນມີໂຄງສ້າງທີ່ໝັ້ນຄົງດີ ເປັນຫີນສິລາທີ່ບໍ່ຜ່ອຍ		
4	ບໍ່ຄວນສ້າງສາຍສະລິງໃກ້ກັບແລວສາຍໄຟຟ້າແຮງສູງ ສະຖານທີ່ຈະຕິດຕັ້ງຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງສະຖານທີ່ ແລະ ຄະນະກຳມະການ.		
5	ກໍລະນີສະລິງຕິດຕັ້ງໃສ່ຕົ້ນໄມ້ ຕົ້ນໄມ້ຕ້ອງມີຂະໜາດໜ້າຕັດຕັ້ງແຕ່ 60 ຊັງຕີແມັດຂຶ້ນ		

	ໄປ ແລະ ຂະໜາດທີ່ເໝາະສົມທີ່ສຸດແມ່ນ 80 – 90 ຊັງຕີແມັດ, ສາມາດເປັນໄມ້ເນື້ອປະສົມ ຫຼື ໄມ້ເນື້ອແຂງກໍ່ໄດ້ ແຕ່ທີ່ສຳຄັນຕ້ອງບໍ່ງ່ຽງ ຫຼື ມີມຸມທີ່ຕັ້ງທ່ຽງດີ ບໍ່ມີດ້ອງ, ແມງ ຫຼື ມິດ ກັດບໍລິເວນຕົ້ນໄມ້ ແລະ ມີການປ້ອງກັນ ດ້ອງ, ແມງ ຫຼື ມິດ ໃນ ອະນາຄົດ		
	ລວມຄະແນນທັງໝົດມີ 5 ຄະແນນ		
	ອະນຸຍາດຜ່ານ 5 ຄະແນນ		
	2. ເງື່ອນໄຂການຕິດຕັ້ງສາຍສະລິງ (9)		
1	ໄລຍະຫ່າງລະຫວ່າງສອງຈຸດ ຄວນຫ່າງເໝາະສົມກັບຄວາມສາມາດ ໃນການຮັບນ້ຳໜັກ ຂອງສາຍສະລິງ, ຄວາມໂຕ່ງ ແລະ ການແກວ່ງໄກວຂອງສະລິງ. ໄລຍະຄວາມສູງ ແລະ ຄວາມໂຕ່ງຂອງສາຍສະລິງ ຈາກຈຸດເລີ່ມຕົ້ນ ຫາຈຸດທີສອງ ຄວນມີຂະໜາດທີ່ເໝາະ ສົມ ເຊິ່ງມີຄວາມໂຕ່ງບໍ່ເກີນ 20% - 25% ຂອງຄວາມຍາວສາຍທັງໝົດ		
2	ເລືອກໃຊ້ສາຍສະລິງເສັ້ນດຽວ ໃນການດຶງ ແມ່ນດຶງຈາກຈຸດເລີ່ມຕົ້ນ ຫາຈຸດ (ຈຸດສູງ) (ຫ້າມບໍ່ໃຫ້ຕໍ່ສາຍສະລິງ) ຂອງແຕ່ລະໄລຍະ(ຈຸດຕ່ຳ) ສິ້ນສຸດ		
3	ສາຍສະລິງຕ້ອງໄດ້ມາດຕະຖານ ISO 2001) ແຮງດຶງບໍ່ໜ້ອຍກວ່າ 1470 ນິວຕັນ/ມິລິແມັດ^2, ສ່ວນປະສົມຂອງແຮ່ທາດເຫຼັກ (ແລະ ຕ້ອງມີການກວດສອບໃຫ່ຍທຸກໆ 6 ເດືອນ ແລະ ມີການປ່ຽນແທນ ໃນທຸກໆ 9000-10.000 ຄ້ຽວ ຫຼື ກໍລະນີທີ່ມີການ ກວດພົບການເສຍຫາຍຂອງລາຍສະລິງ ເຊັ່ນ: ການຈີກຂາກຂອງສາຍກາບ, ການຟູເປັນ ຝອຍຂອງສາຍກາບ(ສ່ວນຫຼາຍແມ່ນຢູ່ໃກ້ຈຸດສຸດທ້າຍຂອງສາຍ)		
4	ການດຶງສາຍສະລິງ ຜ່ານຈາກຈຸດເລີ່ມຕົ້ນ ຫາຈຸດສຸດທ້າຍ ແລ້ວຍຶດກັບບ່ອນເກາະ (ຕົ້ນໄມ້, ໂຄງເຫຼັກ, ຫີນ...) ແລ້ວດຶງຄວາມໂຕ່ງຂອງສາຍສະລິງໃຫ້ໄດ້ລະດັບ (20-25%). ໃນກໍລະນີສາຍສະລິງມີຄວາມຄ້ອຍຊັນເກີນໄປ ຕ້ອງມີຕີອຊ່ວຍເບກ ໃນຈຸດ ປາຍ		
5	ການຮັດສາຍສະລິງກັບຕົ້ນໄມ້ຕ້ອງໄດ້ມີໝອນຮອງລະຫ່ວາງສາຍສະລິງກັບຕົ້ນໄມ້ ຄັກແນ່ (ບໍ່ວ່າຈະເຮັດຈາກໄມ້ເນື້ອແຂງ ຫຼື ພັດສະຕິກ)ເພື່ອໃຫ້ຕົ້ນໄມ້ສາມາດ ຂະຫຍາຍຕົວຕໍ່ໄປໄດ້ ພ້ອມທັງເປັນການກະຈາຍແຮງໃນການຮັບນ້ຳໜັກໃຫ້ແກ່ຕົ້ນໄມ້		
6	ຕ້ອງກ້ຽວອ້ອມຕົ້ນໄມ້ 3 ຮອບ ແລ້ວມີການຍຶດປີກຂອງສາຍສະລິງ, ເພື່ອປ້ອງກັນການ ແກວ່ງຂອງສາຍສະລິງ, ຫຼັງຈາກຍຶດກັບຕົ້ນໄມ້ 3 ຮອບແລ້ວ ຕ້ອງຈົ່ງສິ້ນຂອງສາຍສະ ລິງໄວ້ປະມານ 2 - 3 ແມັດ ແລ້ວກ້ຽວສາຍດັ່ງກ່າວກັບມາເຮັດສາຍຍຶດເພື່ອຮັກສາ ຄວາມປອດໄພຂອງນັກທ່ອງທ່ຽວ (ບ່ອນເກາະສາຍເຊບ) ນອກຈາກນີ້ການຈົ່ງສິ້ນ ດັ່ງກ່າວຍັງຊ່ວຍຮັບປະກັນກໍລະນີກົບລ້ອກສາຍຫຼັກເກີດການຫຼົ່ນ ຫຼື ມີການເຄື່ອນທີ່		
7	ໝອນຮອງທີ່ເຮັດດ້ວຍໄມ້ຕ້ອງມີຂະໜາດ 10X10 ຊັງຕີແມັດ, ມີຄວາມຍາວ 30-50 ຊັງຕີແມັດ ແລະ ໄລຍະຫ່າງກັນ 10-20 ຊັງຕີແມັດ ພ້ອມທັງຍຶດສິ້ນເບື້ອງເທິງ ແລະ ລຸ່ມຂອງໝອນຮອງ.		

8	ການຮັດສາຍສະລິງເຂົ້າກັນຕ້ອງໃສ່ກິບຮັດ ບໍ່ໃຫ້ໜຸດ ຈຸດ ຂຶ້ນໄປ ແລະ ຫັນນອດ 3 ວາງເທິງເສັ້ນສະລິງ (ສິ້ນທີ່ຕັດ) ໃຫ້ແໜ້ນດີ ການລ໋ອກກິບ ຕ້ອງໃຫ້ສິ້ນທີ່ສັ້ນ ແລ້ວລັອກກິບໂຕທຳອິດໃຫ້ແໜ້ນດີ ຈາກນັ້ນກໍ່ລັອກກິບໂຕທີສອງ ແລະ ໂຕທີສາມ 15 – 7 ຕາມລຳດັບ ເຊິ່ງມີໄລຍະຫ່າງຂອງກິບແຕ່ລະໂຕປະມານຊັງຕີແມັດ ຫຼື ໄລຍະຂອງຮອຍຕໍ່ ບໍ່ໜຸດ ຊັງຕີແມັດ ສິ້ນຂອງສາຍສະລິງທຸກບ່ອນ ຕ້ອງມີວັດສະດຸຫຸ້ມຫໍ່ 50 ແລະ ຄຽນດ້ວມແຜນພາດສະຕິກໃຫ້ແໜ້ນດີເພື່ອຄວາມປອດໄພ		
9	ມີການທົດລອງນຳໃຊ້ວັດສະດຸທີ່ມີນ້ຳໜັກເທົ່າກັບນ້ຳໜັກເບົາສຸດ ແລະ ສູງສຸດຂອງນັກທ່ອງທ່ຽວທີ່ອະນຸຍາດໃຫ້ຂີ່		
	ລວມຄະແນນທັງໝົດມີ 9 ຄະແນນ		
	ອະນຸຍາດຜ່ານ 9 ຄະແນນ		
	3. ເງື່ອນໄຂການສ້າງ ແລະ ຕິດຕັ້ງສະຖານນີ (Platform) (6)		
1	ສະຖານີ (ຈຸດຮັບ-ຈຸດປ່ອຍ) ຕ້ອງສ້າງຈາກວັດສະດຸທີ່ມີຄວາມແຂງແຮງ ແລະ ທົນທານຕໍ່ສະພາບແວດລ້ອມ ເພື່ອຮັບປະກັນ ບໍ່ມີການໂດກຜ່ອຍ ຫຼື ແຕກຫັກ		
2	ມີໂຄງສ້າງທີ່ແຂງແຮງ ພ້ອມທັງມີການຍຶດເກາະທີ່ເໝາະສົມ		
3	ມີເນື້ອທີ່ພຽງພໍສຳລັບນັກທ່ອງທ່ຽວທີ່ມາເຖິງ ແລະ ຢືນລໍຖ້າສຳລັບໄປຕໍ່ ມີລັດສະໝີອອກຈາກຕົ້ນໄມ້ ບໍ່ໃຫ້ໜຸດ 1 ແມັດ ຫຼື ມີຂະໜາດບໍ່ໃຫ້ໜຸດ 4 ແມັດມົນທົນ ໃນກໍລະນີບໍ່ຢູ່ເທິງຕົ້ນໄມ້		
4	ຕ້ອງມີອຸປະກອນປ້ອງກັນການບາດເຈັບຕິດໄວ້ໃນຈຸດທີ່ເສັ້ນສະລິງເຂົ້າມາຮອດ ພ້ອມທັງມີຈຸດຢຶດສາຍນິລະໄພ (ບ່ອນເກາະສາຍເຊບ) ເພື່ອໃຫ້ນັກທ່ອງທ່ຽວໄດ້ເກາະໄວ້ ໃນໄລຍະລໍຖ້າ		
5	ຕ້ອງມີຮາວພະນັກກັນຕົກ		
6	ໄລຍະຄວາມສູງລະຫວ່າງພື້ນຂອງສະຖານີ ຫາ ສາຍສະລິງ ທີ່ໃຊ້ຂີ່ ຕ້ອງຢູ່ລະຫວ່າງ 160 – 170 ຊັງຕີແມັດ		
	ລວມຄະແນນທັງໝົດມີ 6 ຄະແນນ		
	ອະນຸຍາດຜ່ານ 6 ຄະແນນ		
VI	**ເງື່ອນໄຂອຸປະກອນຂອງຜູ້ໃຊ້ບໍລິການສະລິງ**		
1	**1. ໝວກກັນກະທົບ**		
1	ຕ້ອງໄດ້ມາດຕະຖານ ແລະ ເປັນໝວກສະເພາະສຳລັບການຂີ່ສະລິງ		
2	ມີສາຍຮັດຄາງ		
3	ມີສະພາບສົມບູນ ບໍ່ມີການແຕກແຫ		
2	**2. ຖົງມື**		
1	ເຮັດຈາກວັດສະດຸທີ່ຢືດຫົດໄດ້ງ່າຍ ແລະ ລະບາຍອາກາດໄດ້ດີ		
2	ມີຄວາມສະອາດ ບໍ່ມີກິ່ນເໝັນອັບ		

3	ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)		
3	**3. ຊຸດສຳລັບຂີ່ສະລິ່ງ**		
1	ມີສາຍຮັດ, ສາຍຈ່ອງ ແລະ ຊຸດການຮັດ-ການລັອກ ທີ່ໄດ້ມາດຕະຖານຂອງການຂີ່ສະລິ່ງ		
2	ມີຄວາມສະອາດ		
3	ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)		
4	ມີອາຍຸການໃຊ້ງານທີ່ຊັດເຈນ ຫຼື ມີຄວາມສາມາດໃນການນຳໃຊ້ໄດ້ດີຢູ່ສະເໝີ		
4	**4. ອຸປະກອນຮັບໃຊ້ການຂີ່ສະລິ່ງ**		
1	ເປັນອຸປະກອນທີ່ໄດ້ຮັບການຮັບຮອງ ແລະ ຢັ້ງຢືນ ຈາກບໍລິສັດຜູ້ຜະລິດ ສຳລັບການຂີ່ສະລິ່ງ		
2	ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)		
3	ມີອາຍຸການໃຊ້ງານທີ່ຊັດເຈນ ຫຼື ມີຄວາມສາມາດໃນການນຳໃຊ້ໄດ້ດີຢູ່ສະເໝີ		
4	ບໍ່ມີການເປ່ເພ		
5	**5. ເກີບທີ່ຫຸ້ມຫໍ່ປົກປິດຕີນ**		
1	ເຮັດຈາກວັດສະດຸທີ່ຍືດຫົດໄດ້ງ່າຍ ແລະ ລະບາຍອາກາດໄດ້ດີ		
2	ມີຄວາມສະອາດ ບໍ່ມີກິ່ນເໝັນອັບ		
3	ມີສະພາບສົມບູນ (ບໍ່ຈີກ ບໍ່ຂາດ)		
	ລວມຄະແນນທັງໝົດມີ 12 ຄະແນນ		
	ອະນຸຍາດຜ່ານ 8 ຄະແນນ		
	ລວມຄະແນນທັງໝົດຂອງມາດຕະຖານມີ 108 ຄະແນນ		
	ອະນຸຍາດຜ່ານ 83 ຄະແນນ (ມາດຕະຖານ)		

❖ ເກນການໃຫ້ຄະແນນ ແລະ ວິທີຄິດໄລ່ຄະແນນ

ກິດຈະກຳຂີ່ສະລິ່ງຕ້ອງໄດ້ຄະແນນ 83 ຄະແນນ ຫຼື 76,8% ຂອງມາດຕະຖານທັງໝົດ ຂຶ້ນໄປຈຶ່ງຖືວ່າຜ່ານ ມາດຕະຖານກິດຈະກຳການທ່ອງທ່ຽວ ແຕ່ໃນນີ້ ເງື່ອນໄຂຂອງພະນັກອຸປະກອນ, ການຕິດຕັ້ງ, ສະຖານີ ແລະ ອຸປະກອນຮັບໃຊ້ສຳລັບນັກທ່ອງທ່ຽວຕ້ອງໄດ້ 100%. ວິທີການໃຫ້ຄະແນນແມ່ນໃຫ້ໝາຍໃສ່ໃນຫ້ອງ “ມີ” ຈຶ່ງຈະໄດ້ຄະແນນ.

❖ **ການອອກໃບຢັ້ງຢືນ**

- ການຢັ້ງຢືນຈະໄດ້ຖືກດຳເນີນໂດຍ ຄະນະກຳການປະເມີນມາດຕະຖານກິດຈະກຳການທ່ອງທ່ຽວຂີ່ສະລິງ (ຂັ້ນສູນກາງ ຫລື ທ້ອງຖິ່ນ) ທີ່ໄດ້ຮັບການແຕ່ງຕັ້ງ.
- ພາກທຸລະກິດ/ຜູ້ປະກອບການ ເຫັນວ່າມີເງື່ອນໄຂ ສາມາດນຳສະເໜີ ເພື່ອສະເໜີຂໍການຮັບຮອງ ແລະ ຢັ້ງຢືນ ມາດຕະຖານ
- ຄະນະກຳມະການມາດຕະຖານກິດຈະກຳການທ່ອງທ່ຽວຂີ່ສະລິງ ຈະໄດ້ລົງກວດການ ແລະ ປະເມີນ
- ຄະນະກຳມະການມາດຕະຖານກິດຈະກຳຂີ່ສະລິງ ສ້າງບົດລາຍງານ ແລະ ຮັບຮອງເອົາຜົນການປະເມີນ
- ພາຍຫຼັງກິດຈະກຳການທ່ອງທ່ຽວຂີ່ສະລິງ ທີ່ໄດ້ຕາມມາດຕະຖານ ແລະ ໄດ້ເງື່ອນໄຂຄົບຖ້ວນແລ້ວ, ຄະນະກຳມະການ ຈະໄດ້ອອກໃບຢັ້ງຢືນ ແລະ ແຜ່ນປ້າຍມາດຕະຖານ.
- ໄລຍະເວລາຂອງໃບຢັ້ງຢືນກຳນົດ 2 ປີ

ພາກທີ III:

ມາດຕະການໃນການຈັດຕັ້ງປະຕິບັດ, ນະໂຍບາຍ, ມາດຕະການຕໍ່ຜູ້ລະເມີດ

ມາດຕະຖານກິດຈະກຳການທ່ອງທ່ຽວຂີ່ສະລິງ ສະບັບນີ້ ຕ້ອງເຜີຍແຜ່ໃຫ້ພາກສ່ວນຕ່າງໆ ທັງພາກລັດ, ພາກທຸລະກິດ ທີ່ກ່ຽວຂ້ອງຢູ່ຂັ້ນແຂວງ ແລະ ຂັ້ນທ້ອງຖິ່ນຮັບຮູ້ຢ່າງກ້ວາງຂວາງ ແລະ ເລິກເຊິ່ງດ້ວຍຫຼາຍຮູບແບບ.

1. ຂໍ້ຫ້າມ

- ຫ້າມສວຍໂອກາດເອົາໜ່ວຍບໍລິການທ່ອງທ່ຽວ ເປັນບ່ອນຄ້າຂາຍຜິດກົດໝາຍ, ມົ່ວສຸມ, ຄ້າປະເວນີ, ສິ່ງເສບຕິດ, ຫຼີ້ນການພະນັນ, ຈັດຕັ້ງຊຸມນຸມທາງການເມືອງ ທີ່ຜິດຕໍ່ລະບຽບກົດໝາຍຢ່າງເດັດຂາດ.
- ຫ້າມນຳພານັກທ່ອງທ່ຽວໄປທ່ອງທ່ຽວໂດຍບໍ່ໄດ້ຮັບອະນຸຍາດ.
- ຫ້າມໜ່ວຍບໍລິການການທ່ອງທ່ຽວ ສວຍໂອກາດຂຶ້ນ ຫຼື ລ້ຽງລາຄາຄ່າບໍລິການຕາມໃຈນັກທ່ອງທ່ຽວ ໃນ ເທດສະການ, ງານບຸນຕ່າງໆ ເຊັ່ນ: ບຸນປີໃໝ່ລາວ ແລະ ອື່ນໆ.
- ຫ້າມຜູ້ປະກອບການສ້າງຄວາມແຕກແຍກ ແລະ ເຮັດໃຫ້ມີຂໍ້ຂັດແຍ່ງຕ່າງໆເກີດຂຶ້ນກ່ຽວກັບການບໍລິການຂີ່ສະລິງ.

7. ການແກ້ໄຂຂໍ້ຂັດແຍ່ງ

ຄະນະກຳມະການ ແລະ ສະມາຊິກທຸກຄົນໃນແຕ່ລະກຸ່ມບໍລິການຂີ່ສະລິງ ໃນກໍລະນີເກີດຂໍ້ຂັດແຍ່ງພາຍໃນກຸ່ມ ຫລື ພາຍນອກ ຄະນະກຳມະການການປະເມີນຜົນ ຕ້ອງໄດ້ຮັບຜິດຊອບສືບຫາຂໍ້ມູນທີ່ໄປທີ່ມາຂອງບັນຫາ ເພື່ອມາປຶກສາຫາລື ແລະ ຊອກທາງອອກໃນການແກ້ໄຂຂໍ້ຂັດແຍ່ງໃຫ້ສອດຄ່ອງກັບລະບຽບກົດໝາຍຂອງບ້ານເມືອງ.

ໃນກໍລະນີການໄກ່ເກ່ຍບັນຫາຕ່າງໆ ຖ້າບໍ່ສາມາດແກ້ໄຂໄດ້ໃນຂັ້ນບ້ານ, ກຸ່ມ, ເມືອງ ໃຫ້ສະເໜີໃຫ້ຂັ້ນແຂວງ ຫຼື ສູນກາງ ເພື່ອຊອກວິທີການ ຫລື ມາດຕະການຂັ້ນເດັດຂາດ ເພື່ອເປັນຕົວຢ່າງແກ່ການຈັດຕັ້ງປະຕິບັດວຽກງານຕໍ່ໄປ.

8. ນະໂຍບາຍຕໍ່ຜູ້ມີຜົນງານ

ຄະນະບໍລິຫານງານ ແລະ ຜູ້ປະກອບການທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດ ກົດລະບຽບ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຈາກຂັ້ນຕ່າງໆ ຕາມຄວາມເໝາະສົມເປັນຕົ້ນ ໄດ້ຮັບສິດທິໃນໂຄສະນາໃນ

ເວັບໄຊ ການທ່ອງທ່ຽວຂອງສູນກາງ, ແຂວງ, ໂຄສະນາຜ່ານສື່ປະເພດຕ່າງໆ, ຝຶກອົບຮົມກ່ຽວກັບວຽກທ່ອງທ່ຽວ ແລະ ທັດສະນະສຶກສາຢູ່ ພາຍໃນ ແລະ ຕ່າງປະເທດ.

9. ມາດຕະການຕໍ່ຜູ້ລະເມີດ

ຫາກຜູ້ປະກອບການຂີ່ສະລິ່ງ ລະເມີດຕໍ່ເງື່ອນໄຂກິດຈະກຳການທ່ອງທ່ຽວ ສະບັບນີ້ຈະຖືກປະຕິບັດ ວິໄນດັ່ງນີ້:

- ຄັ້ງທີ 1 ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກ
- ຄັ້ງທີ 2 ເຮັດບົດບັນທຶກ ພ້ອມທັງປະຕິບັດລະບຽບການປັບໃໝ ໃນມູນຄ່າ : .....
- ຄັ້ງທີ 3: ເຮັດບົດບັນທຶກ ພ້ອມທັງປະຕິບັດລະບຽບການປັບໃໝ ໃນມູນຄ່າ : ..... ພ້ອມທັງໃຫ້ໂຈະການດຳເນີນກິດຈະການ 03 ເດືອນ ເພື່ອປັບປຸງຄືນ
- ຄັ້ງທີ 4: ເຮັດບົດບັນທຶກ ພ້ອມທັງປະຕິບັດລະບຽບການປັບໃໝ ໃນມູນຄ່າ : ..... ພ້ອມທັງໃຫ້ຍຸບເລີກກິດຈະການ
- ຖ້າຫາພາກສ່ວນໃດ, ສະຖານທີ່ທ່ອງທ່ຽວໃດ ບໍ່ຈັດຕັ້ງປະຕິບັດມາດຕະຖານສະບັບນີ້ ສຸນກາງ, ພະແນກ ຖວທ ແຂວງ, ຫຼື ຫ້ອງການ ຖວທ ເມືອງ ຈະບໍ່ຕໍ່ໃບອະນຸຍາດໃນການດຳເນີນທຸລະກິດໃຫ້ໃນປີຕໍ່ໆໄປ ພ້ອມທັງດຳເນີນການຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຕາມສະຖານໜັກ ຫຼື ເບົາ.

ເອກະສານອ້າງອີງ

- ISO 7531, *Wire rope slings for general purposes Characteristics and specifications.* [1)]

This International Standard lays down safety criteria and inspection procedures for the regular use of wire sling ropes.

NOTES

- 1 The specifications and testing of slings are specified in ISO 7531.
- 2 The use of wire rope slings is frequently covered by national regulations; these would take precedence over this International Standard.

https://www.ziplinegear.com/pages/how-to-build-a-zip-line-section-two-cable-installation

https://www.ziplinegear.com/products/cs?variant=33633121729

https://www.alibaba.com/product-detail/High-Tensile-Top-products-compacted-steel_60827251924.html?spm=a2700.7735675.normalList.13.6723642fDMcn40&s=p

https://ntsanjayro.en.made-in-china.com/product/MBXEfGgUuLpA/China-Galvanized-Pulling-Steel-Cable-Wire-Rope-Sling.html



ຈັດພິມໂດຍ: ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ສະໜັບສະໜູນໂດຍ: ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2
Second GMS Tourism Infrastructure for Inclusive Growth Project-TIIG 2/ADB